


# ຄູ່ມືແນະນຳ

## ການປະເມີນມາດຕະຖານນ້ຳ ແລະ ສຸຂະອະນາໄມ
## ໂດຍນຳໃຊ້ຮູບແບບ 3 ດາວ
## ສຳລັບສະຖານການສຶກສາກ່ອນໄວຮຽນ

# ຄຳນຳ

ປື້ມຄູ່ມືແນະນຳການປະເມີນ ວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ ໂດຍນຳໃຊ້ຮູບແບບ 3 ດາວເຊິ່ງແມ່ນກົມອະນຸບານ ແລະ ປະຖົມສຶກສາ ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການໃນການພັດທະນາຮ່ວມກັບກະຊວງສາທາລະນະສຸກ ແລະ ໄດ້ຮັບການສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາ ອົງການ ຈີໄອແຊັດ (GIZ), ອົງການສະຫະປະຊາຊາດກອງທຶນສຳລັບເດັກ (UNICEF), ອົງການແພລນສາກົນ (Plan International), ອົງການສຸພານິມິດ (WVI) ແລະ ອົງການຈັດຕັ້ງສາກົນອື່ນໆ.

ປື້ມຄູ່ມືແນະນຳການປະເມີນວຽກງານນ້ຳ ແລະ ສຸຂະອະນາໄມສະບັບນີ້ ພັດທະນາຂຶ້ນໂດຍອີງໃສ່ກົດໝາຍການສຶກສາສະບັບປັບປຸງ (2015), ນະໂຍບາຍແຫ່ງຊາດວ່າດ້ວຍວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, ມາດຕະ ຖານຄຸນນະພາບການສຶກສາສຳລັບຊັ້ນປະຖົມ/ ການສຶກສາກ່ອນໄວຮຽນ, 3 ຂໍ້ແຂ່ງຂັນຂອງກະຊວງສຶກສາທິການ ແລະ ກິລາ, ຍຸດທະສາດແຜນພັດທະນາຂະແໜງຍ່ອຍການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ປີ 2016-2020 (ແຜນ VIII), ແຜນການຈັດຕັ້ງປະຕິບັດວຽກງານຈັດຫານ້ຳສະອາດ ແລະ ອະນາໄມສິ່ງແວດລ້ອມ, ນະໂຍບາຍສົ່ງເສີມອາຫານທ່ຽງໃນໂຮງຮຽນ.

ປື້ມຄູ່ມືແນະນຳສະບັບນີ້ແມ່ນໄດ້ກຳນົດມາດຕະຖານ ແລະ ຕົວຊີ້ບອກຂອງວຽກງານສຸຂະອະນາໄມໃນໂຮງຮຽນ ປະກອບມີ 6 ດ້ານ, 25 ຕົວຊີ້ວັດ, 58 ລາຍການປະເມີນ. ເຊິ່ງເປັນທິດທາງຊ່ວຍໃຫ້ໂຮງຮຽນ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ລວມທັງຂັ້ນສູນກາງ ໃນການຕິດຕາມ, ຊຸກຍູ້, ປະເມີນການຈັດຕັ້ງປະຕິບັດ ແລະ ປັບປຸງວຽກງານສຸຂະອະນາໄມໃນໂຮງຮຽນ ໄດ້ຢ່າງງ່າຍດາຍ, ສາມາດຜັນຂະຫຍາຍໄດ້ ແລະ ມີຄວາມຍືນຍົງ ທັງພາກລັດ ແລະ ເອກະຊົນໃນຂອບເຂດທົ່ວປະເທດ.

ປື້ມຄູ່ມືແນະນຳສະບັບນີ້ບໍ່ອາດປາສະຈາກໄດ້ບັນດາຂໍ້ຂາດຕົກບົກຜ່ອງ ບໍ່ວ່າຈະເປັນທາງດ້ານເນື້ອໃນ, ຄຳສັບ ຕະຫຼອດຮອດການຮຽບຮຽງຕ່າງໆ ແຕ່ແນວໃດກໍດີທາງຄະນະຮັບຜິດຊອບມີຄວາມຍິນດີ ແລະ ຫວັງເປັນຢ່າງຍິ່ງວ່າຈະໄດ້ຮັບການຕຳນິຊົມໃນທາງທີ່ສ້າງສັນ ຈາກບັນດາທ່ານຜູ້ອ່ານ ແລະ ຜູ້ຊົມໃຊ້ ເພື່ອຈະໄດ້ນຳໄປປັບປຸງແກ້ໄຂໃຫ້ດີຂຶ້ນໃນອະນາຄົດ.




# ສາລະບານ


**ຄຳນຳ** 2

**ພາກສະເໜີ** 4

ຄວາມເປັນມາ ແລະ ເຫດຜົນ 5
ຈຸດປະສົງ 5

**ແນວຄວາມຄິດ ແລະ ການປະຕິບັດຮູບແບບ 3 ດາວ** 6

ແນວຄວາມຄິດ 7
ການປະຕິບັດ ຮູບແບບ 3 ດາວ 8

**ມາດຕະຖານການປະເມີນວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ** 10

ພາບລວມ: ມາດຕະຖານການປະເມີນ 11

**ການປະເມີນ** 12

ຂະບວນການ ແລະ ຄວາມຮັບຜິດຊອບໃນການປະເມີນ 14
ຄະນະຮັບຜິດຊອບ 16
ວິທີການ ແລະ ໄລຍະຈັດຕັ້ງປະຕິບັດ 17
ເຄື່ອງມືໃນການປະເມີນ 17

**ມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນໂດຍນຳໃຊ້ຮູບແບບ 3 ດາວ** 18

**ຕາຕາລາງ ອະທິບາຍຕົວຊີ້ບອກ, ລາຍການປະເມີນ, ຫຼັກຖານການຕີລາຄາ ແລະ ກິດຈະກຳ** 20
1. ດ້ານນ້ຳໃຊ້ 20
2. ດ້ານນ້ຳດື່ມສະອາດປອດໄພ 22
3. ດ້ານວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍ 23
4. ດ້ານສະພາບແວດລອມ 24
5. ດ້ານການອະນາໄມສ່ວນບຸກຄົນ 26
6. ດ້ານການກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 27

**ໃບປະເມີນມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນປະຖົມໂດຍນຳໃຊ້ ຮູບແບບ 3 ດາວ** 28

**ການຕິດຕາມ, ລາຍງານ, ຈັດອັນດັບ ແລະ ຍ້ອງຍໍ** 30
ການຕິດຕາມ ແລະ ລາຍງານ 31
ການຈັດລຳດັບ ແລະ ການຍ້ອງຍໍ 33

**ຂໍ້ແນະນຳໃນການເຜີຍແຜ່, ການສັງລວມ ແລະ ວິເຄາະຂໍ້ມູນ** 34
ຂໍ້ແນະນຳໃນການເຜີຍແຜ່ 35
ການສັງລວມ ແລະ ວິເຄາະຂໍ້ມູນ 36

ເອກະສານອ້າງອີງ 38
ຈັດພິມ 38

# ພາກສະເໜີ





## ຄວາມເປັນມາ ແລະ ເຫດຜົນ

ວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ເປັນວຽກງານໜຶ່ງທີ່ມີການຈັດຕັ້ງປະຕິບັດມາແຕ່ປີ 2005, ແຕ່ການປະຕິບັດຍັງເປັນແບບຜິວເຜີນ, ກະແຈກກະຈາຍ ແລະ ບໍ່ມີລັກສະນະຮອບດ້ານ. ໂດຍທົ່ວໄປຈະເນັ້ນໃສ່ສະເພາະການອະນາໄມໃນໂຮງຮຽນ ແລະ ສິ່ງແວດລ້ອມດ້ານກາຍຍະພາບເທົ່ານັ້ນ. ການຈັດຕັ້ງປະຕິບັດຜ່ານມາຍັງມີຂໍ້ຫຍຸ້ງຍາກຫຼາຍປະການ ເຊັ່ນ: ງົບປະມານມີຈໍາກັດ, ປະສົບປະການ ແລະ ຄວາມສາມາດໃນການດໍາເນີນງານຂອງຜູ້ບໍລິຫານແຕ່ລະຂັ້ນຍັງອ່ອນນ້ອຍ ແລະ ການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນເຂັ້ມແຂງ.

ແຜນພັດທະນາ 5 ປີ (2016-2020) ສໍາລັບຂະແໜງການຍ່ອຍການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ໄດ້ກໍານົດຍຸດທະສາດກ່ຽວກັບວຽກງານສົ່ງເສີມສຸຂະພາບ, ສຸຂະອານາໄມ ແລະ ໂພຊະນາການໃນໂຮງຮຽນ ໂດຍມີຈຸດປະສົງເພື່ອປັບປຸງໂພຊະນາການຂອງເດັກ, ເຮັດໃຫ້ເດັກມີສຸຂະພາບແຂງແຮງ, ມີພັດທະນາການທາງດ້ານຮ່າງກາຍ ແລະ ມັນສະໝອງທີ່ດີ ເພື່ອປັບປຸງຄຸນນະພາບຂອງການຮຽນ ເນັ້ນໃສ່ເດັກທຸກຍາກ ແລະ ເດັກໃນເຂດຫ່າງໄກສອກຫຼີກ.

ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງສາທາລະນະສຸກ ໄດ້ອອກນິຕິກໍາຕ່າງໆຫຼາຍສະບັບທີ່ກ່ຽວພັນເຖິງວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ (ສສຮ) ເພື່ອເປັນບ່ອນອີງໃນການປະຕິບັດວຽກງານດັ່ງກ່າວ. ນອກຈາກນີ້ທັງສອງກະຊວງຍັງໄດ້ຮ່ວມມືກັນແບບໃກ້ຊິດ ໃນການສົ່ງເສີມສຸຂະພາບຂອງນັກຮຽນ ໂດຍສະເພາະໃນຊັ້ນປະຖົມສຶກສາ ແລະ ຫ້ອງກຽມປະຖົມ ໂດຍໄດ້ສ້າງນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມສຸຂະພາບໃນໂຮງຮຽນ (ປີ2010). ພ້ອມກັນນັ້ນກໍ່ໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບຮ່ວມນັບແຕ່ຂັ້ນສູນກາງລົງຮອດຂັ້ນທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວມາຈົນເຖິງປະຈຸບັນ.

ເພື່ອຕອບສະໜອງວິໄສທັດ, ຍຸດທະສາດ, ນະໂຍບາຍ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໃນການແກ້ໄຂບັນຫາທີ່ມັກເກີດຂຶ້ນກັບເດັກ ແລະ ນໍາເອົາຜົນຂອງກອງປະຊຸມແລກປ່ຽນບົດຮຽນປະຈໍາປີລະດັບສາກົນ ກ່ຽວກັບນໍ້າ ແລະ ສຸຂະອະນາໄມ ໃນປີ 2013 ທີ່ເຫັນດີເປັນເອກະພາບ ໃຫ້ບັນດາປະເທດພາຄີ ນໍາເອົາການປະເມີນວຽກງານນໍ້າ ແລະ ສຸຂະອະນາໄມ ໂດຍນໍາໃຊ້ຮູບແບບ 3 ດາວ ໄປຈັດຕັ້ງປະຕິບັດ ໂດຍແມ່ນ ອົງການ ກອງທຶນສະຫະປະຊາຊາດສໍາລັບເດັກ (UNICEF) ແລະ ອົງການ ຈີໄອແຊັດ (GIZ) ເປັນຜູ້ສະໜັບສະໜູນ. ດັ່ງນັ້ນ, ຈຶ່ງໄດ້ສ້າງປຶ້ມຄູ່ມືແນະນໍາການປະເມີນວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ສະບັບນີ້ຂຶ້ນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມສຸຂະພາບ ໃຫ້ເປັນລະບົບ ແລະ ມີຄວາມຍືນຍົງ.

## ຈຸດປະສົງ

**ຄູ່ມືແນະນໍາການປະເມີນວຽກງານດ້ານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນສະບັບນີ້ມີຈຸດປະສົງ:**

- ເພື່ອນໍາໃຊ້ມາດຕະຖານເຂົ້າໃນການປະເມີນວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ.
- ເພື່ອຕີລາຄາຜົນການຈັດຕັ້ງປະຕິບັດ ແລະ ຈັດອັນດັບຕາມຫຼັກການ 3 ດາວ.
- ເພື່ອໃຫ້ໄດ້ຂໍ້ມູນສໍາລັບການວາງແຜນພັດທະນາໂຮງຮຽນ.
- ເພື່ອເປັນການຊຸກຍູ້, ສົ່ງເສີມ, ປັບປຸງ ແລະ ປ່ຽນແປງພຶດຕິກໍາຂອງເດັກໄປໃນທາງທີ່ດີ.



# ແນວຄວາມຄິດ ແລະ ການປະຕິບັດຮູບແບບ 3 ດາວ





## ແນວຄວາມຄິດ

ການປະເມີນວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ໂດຍນໍາໃຊ້ຮູບແບບ 3 ດາວ ແມ່ນອີງໃສ່ ກອງປະຊຸມ ແລກປ່ຽນບົດຮຽນປະຈໍາປີລະດັບສາກົນ ກ່ຽວກັບນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ທີ່ໄດ້ຈັດໃນແຕ່ລະປີ ເລີ່ມແຕ່ປີ 2013 ເປັນຕົ້ນມາ. ກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບ ໃຫ້ປະເທດພາຄີ ໄດ້ນໍາເອົາການປະເມີນຮູບແບບ 3 ດາວ ໄປຈັດຕັ້ງປະຕິບັດ ແລະ ໄດ້ພັດທະນາປື້ມຄູ່ມືແນະນໍາການປະເມີນມາດຕະຖານດ້ານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ໂດຍນໍາໃຊ້ຮູບແບບ 3 ດາວ ທີ່ໄດ້ພິມເຜີຍແຜ່ໂດຍອົງການຢູນິເຊບ ແລະ ອົງການຈີໄອແຊັດ ໃນເດືອນ ສິງຫາ 2013 ເພື່ອໃຫ້ແຕ່ລະປະເທດ ນໍາໄປຜັນຂະຫຍາຍ.

ຮູບແບບ 3 ດາວ ໝາຍເຖິງການຈັດອັນດັບການປະຕິບັດມາດຕະຖານດ້ານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ທັງເປັນການກະຕຸກຊຸກຍູ້ໃຫ້ໂຮງຮຽນສາມາດປະເມີນ ແລະ ຕີລາຄາລະດັບການຈັດຕັ້ງປະຕິບັດວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນຕົນເອງ.

ເດັກນ້ອຍທຸກຄົນມີສິດເຂົ້າເຖິງການບໍລິການດ້ານນໍ້າ ແລະ ສຸຂະອະນາໄມ ສິດທິດັ່ງກ່າວນີ້ ຈໍາເປັນຕ້ອງໄດ້ຮັບການສະໜັບສະໜູນຈາກໂຮງຮຽນ ເຊິ່ງເປັນບ່ອນທີ່ເດັກໃຊ້ເວລາສ່ວນໃຫຍ່ຂອງເຂົາເຈົ້າໃນແຕ່ລະວັນ. ນໍ້າ ແລະ ສຸຂະອະນາໄມທີ່ພຽງພໍ ເປັນສ່ວນໜຶ່ງຂອງສະພາບແວດລ້ອມທີ່ດີຕໍ່ສຸຂະພາບ, ເຊິ່ງເປັນປັດໃຈສໍາຄັນໃນການພັດທະນາ ແລະ ການຈະເລີນເຕີບໂຕຂອງເດັກ. ການສົ່ງເສີມພຶດຕິກໍາທີ່ຖືກສຸຂະລັກສະນະຢູ່ໂຮງຮຽນ ສາມາດຊ່ວຍໃຫ້ມີການປ່ຽນແປງພຶດຕິກໍາທີ່ດີຂອງເດັກຕະຫຼອດໄປ.

ຮູບແບບ 3 ດາວ ເປັນການສົ່ງເສີມການປ່ຽນແປງພຶດຕິກໍາດ້ານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ແລະ ຮັບປະກັນໃຫ້ນັກຮຽນໄດ້ເຝິກແອບໃຫ້ກາຍເປັນກິດຈະວັດປະຈໍາວັນຂອງໂຮງຮຽນ ເພື່ອສ້າງໃຫ້ມີນິໄສຮັກຄວາມສະອາດ.

ຮູບແບບ 3 ດາວ ສົ່ງເສີມໃຫ້ໂຮງຮຽນນໍາໃຊ້ບາດກ້າວທີ່ງ່າຍດາຍ ແລະ ມີຄ່າໃຊ້ຈ່າຍບໍ່ແພງ. ບາດກ້າວເຫຼົ່ານີ້ ໄດ້ອອກແບບມາ ເພື່ອຮັບປະກັນໃຫ້ໂຮງຮຽນມີສະພາບແວດລ້ອມທີ່ສະອາດ, ນັກຮຽນທຸກຄົນ ໄດ້ລ້າງມືໃສ່ສະບູ, ດື່ມນໍ້າສະອາດ ແລະ ໃຊ້ວິດຖ່າຍ-ຫ້ອງອາບນ້ໍາສະອາດ ແຍກຍິງ-ຊາຍ.

ຮູບແບບ 3 ດາວ ຊ່ວຍເພີ່ມຄວາມຮູ້, ການຕັດສິນໃຈຂອງຜູ້ອໍານວຍການ ແລະ ຜູ້ບໍລິຫານຂັ້ນຕ່າງໆ ໃນການວາງແຜນປັບປຸງວຽກງານນໍ້າ ແລະ ສຸຂະອະນາໄມໃນສະຖານການສຶກສາກ່ອນໄວຮຽນ ໂດຍການຈັດລຽງບູລິມະສິດສິ່ງທີຈໍາເປັນທີ່ຈະຕ້ອງປະຕິບັດກ່ອນ. ນອກຈາກນັ້ນ, ຮູບແບບ 3 ດາວ ໄດ້ຊ່ວຍໃຫ້ບັນດາໂຮງຮຽນຈັດຕັ້ງປະຕິບັດ ໄປຕາມມາດຕະຖານດ້ານນ້ໍາ ແລະ ສຸຂະອະນາໄມໃນສະຖານການສຶກສາກ່ອນໄວຮຽນເປັນເອກະພາບກັນໃນທົ່ວປະເທດ. ເພື່ອບັນລຸໄດ້ຕາມມາດຕະຖານດັ່ງກ່າວ ຈຶ່ງຮຽກຮ້ອງທຸກພາກສ່ວນໃຫ້ການສະໜັບສະໜູນ ແລະ ເປັນເຈົ້າການໃນການປະກອບສ່ວນວຽກງານນີ້.

| ການປ່ຽນແປງຂັ້ນພື້ນຖານ ສໍາລັບວຽກງານນໍ້າ ແລະ ສຸຂະອະນາໄມ | ກ້າວໄປສູ່ໂຮງຮຽນ 3 ດາວ ສໍາລັບວຽກນໍ້າແລະ ສຸຂະອະນາໄມ |
|---|---|
| ສຸ່ມໃສ່ພື້ນຖານໂຄງລ່າງ | ສຸມໃສ່ສຸຂະອະນາໄມ |
| ສຸ່ມໃສ່ການລາງມືແບບສ່ວນບຸກຄົນ | ການຮຽນຮູ້ໃນການຈັດຕັ້ງປະຕິບັດກິດຈະກໍາກຸ່ມ |
| ການລົງທຶນມີມູນຄ່າສູງ | ການແກ້ໄຂລາຄາຖືກ |
| ກອງປະຊຸມອໍານວຍຄວາມສະດວກມາດຕະຖານແຫ່ງຊາດ | ຂັ້ນຕອນດໍາເນີນງານກ້າວໄປສູ່ມາດຕະຖານແຫ່ງຊາດ |
| ເຕັກໂນໂລຢີຊັບຊ້ອນ | ຮູບແບບງ່າຍດາຍ |
| ການເຂົ້າເຖິງຈໍາກັດ | ຜັນຂະຫຍາຍໄດ້ |

Source: Scaling Up – Group Washing in Schools, GIZ, Unicef 2016

# ຫຼັກການປະຕິບັດ ວິທີການ 3 ດາວ

**ການປະຕິບັດຮູບແບບ 3 ດາວ ປະກອບມີ 2 ບາດກ້າວທີ່ສຳຄັນ:**

1. ປຶກສາຫາລື ແລະ ເຫັນດີເປັນເອກະພາບ ລະຫວ່າງໂຮງຮຽນ ແລະ ຊຸມຊົນ;
2. ໂຮງຮຽນເລີ່ມຈັດຕັ້ງປະຕິບັດ ເພື່ອໃຫ້ມີການປັບປຸງວຽກງານນ້ຳ ແລະ ສຸຂະອະນາໄມ ຈາກໂຮງຮຽນທີ່ບໍ່ມີດາວ ກ້າວໄປຫາ 1 ດາວ, 2 ດາວ ແລະ 3 ດາວ ຕາມລຳດັບ ພ້ອມທັງຮັກສາລະດັບ 3 ດາວໄວ້ຄືເກົ່າ.

**ໂຮງຮຽນບໍ່ມີດາວ**
ໝາຍເຖິງ ໂຮງຮຽນບໍ່ມີສິ່ງອຳນວຍຄວາມສະດວກດ້ານນ້ຳ ແລະ ສຸຂະອະນາໄມ ຫຼື ມີສິ່ງອຳນວຍຄວາມສະດວກແຕ່ບໍ່ໄດ້ຊົມໃຊ້ ແລະ ບໍ່ຈັດຕັ້ງປະຕິບັດເປັນປົກກະຕິ. ໝາຍຄວາມວ່າໂຮງຮຽນບໍ່ໄດ້ສະໜັບສະໜູນ ແລະ ສົ່ງເສີມວຽກງານນີ້.

**ໂຮງຮຽນ 1 ດາວ**
ໝາຍເຖິງ ໂຮງຮຽນທີ່ມີສິ່ງອຳນວຍຄວາມສະດວກດ້ານນ້ຳ ແລະ ສຸຂະອະນາໄມ ໃນລະດັບພື້ນຖານ ແລະ ສາມາດຈັດຕັ້ງປະຕິບັດໄດ້ໂດຍບໍ່ໄດ້ໃຊ້ທຶນຮອນຫຼາຍ.

**ດາວ**

**ໂຮງຮຽນ 2 ດາວ**
ແມ່ນໂຮງຮຽນ ຍົກລະດັບຈາກ 1 ດາວ ໂດຍໄດ້ປັບປຸງ ຫຼື ສະໜອງສິ່ງອຳນວຍຄວາມສະດວກໃຫ້ຮັບປະກັນໄດ້ໃນລະດັບໃດໜຶ່ງ ແລະ ນັກຮຽນເລີ່ມມີການປ່ຽນແປງພຶດຕິກຳໃນທາງທີ່ດີຂຶ້ນ.

**ໂຮງຮຽນ 3 ດາວ**
ແມ່ນໂຮງຮຽນທີ່ບັນລຸໄດ້ຕາມມາດຕະຖານວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ.






# ມາດຕະຖານການປະເມີນວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ















## ພາບລວມ: ມາດຕະຖານການປະເມີນວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ

| ດ້ານ | ★ ຕົວຊີ້ບອກ | ★★ | ★★★ |
|---|---|---|---|
| 1. ດ້ານນ້ຳໃຊ້ | 1.1 ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ມີນ້ຳໃຊ້ພຽງພໍທຸກວັນແຕ່ໄດ້ນຳໃຊ້ແຫຼ່ງນ້ຳຢູ່ນອກໂຮງຮຽນ.<br>1.2 ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ມີບ່ອນຊຶມໃຊ້ນ້ຳທີ່ສະດວກ. | 1.3 ໂຮງຮຽນມີແຫຼ່ງນ້ຳໃຊ້ທີ່ໄດ້ຮັບການປັບປຸງ ແຕ່ບໍ່ພໍໃຊ້ຕະຫຼອດສົກຮຽນ ຕ້ອງໄດ້ນຳໃຊ້ຈາກແຫຼ່ງອື່ນ.<br>1.4 ມີການປົກປັກຮັກສາ ສ້ອມແປງລະບົບນ້ຳ ແລະ ພາຊະນະ ນຳໃຊ້ໄດ້ປົກກະຕິ. | 1.5 ຮັບປະກັນໃຫ້ມີແຫຼ່ງນ້ຳໃຊ້ທີ່ໄດ້ຮັບການປັບປຸງ, ສະອາດ ແລະ ສາມາດນຳໃຊ້ພຽງພໍຕະຫຼອດສົກຮຽນ.<br>1.6 ນັກຮຽນທຸກຄົນ ລວມທັງນັກຮຽນພິການ ສາມາດນຳໃຊ້ນ້ຳໄດ້ຢ່າງສະດວກ ແລະ ປອດໄພ. |
| 2. ດ້ານນ້ຳດື່ມສະອາດປອດໄພ | 2.1 ນັກຮຽນທຸກຄົນໄດ້ດື່ມນ້ຳຢູ່ໃນໂຮງຮຽນ.<br>2.2 ພາຊະນະໃສ່ນ້ຳດື່ມມີຄວາມສະອາດ ຢູ່ສະເໝີ. | 2.3 ນັກຮຽນ ໄດ້ດື່ມນ້ຳທີ່ສະອາດ ແລະ ປອດໄພ ຢ່າງໜ້ອຍເຄິ່ງລິດ/ຄົນ/ມື້<br>2.4 ບ່ອນວາງນ້ຳດື່ມສະດວກ ແລະ ປອດໄພ ສຳລັບນັກຮຽນທຸກຄົນ | 2.5 ໂຮງຮຽນ ຮັບປະກັນໃຫ້ມີນ້ຳດື່ມທີ່ສະອາດ, ປອດໄພ ແລະ ພຽງພໍ (1 ລິດ/ຄົນ/ມື້). |
| 3. ດ້ານວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍ | 3.1 ໂຮງຮຽນມີວິດຖ່າຍ, ບ່ອນທຳຄວາມສະອາດຮ່າງກາຍ, ບ່ອນລ້າງມືເປັນກຸ່ມທີ່ສະອາດ ແລະ ປອດໄພ.<br>3.2 ມີການປົກປັກຮັກສາ ແລະ ສ້ອມແປງວິດຖ່າຍ, ບ່ອນລ້າງມື ແລະ ບ່ອນທຳຄວາມສະອາດຮ່າງກາຍໃຫ້ໃຊ້ ໄດ້ປົກກະຕິ. | 3.3 ມີວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍໄດ້ຮັບການປັບປຸງ ແລະ ເໝາະສົມກັບສ່ຳອາຍຸຂອງເດັກ ແລະ ໃຊ້ໄດ້ເປັນປົກກະຕິ. | 3.4 ໂຮງຮຽນຮັບປະກັນໃຫ້ມີຫ້ອງວິດຖ່າຍ, ຫ້ອງອາບນ້ຳເໝາະສົມກັບຈຳນວນນັກຮຽນ, ສະດວກສຳລັບເດັກພິການ ແລະ ມີບ່ອນຍ່ຽວສຳລັບນັກຮຽນຊາຍ ພ້ອມທັງນຳໃຊ້ເປັນປົກກະຕິ. |
| 4. ດ້ານສະພາບແວດລ້ອມ | 4.1 ໃນ ແລະ ນອກຫ້ອງຮຽນມີຄວາມສະອາດ ແລະ ປອດໄພ. | 4.2 ຫ້ອງຄົວ ຫຼື ບ່ອນທີ່ເດັກກິນເຂົ້າທີ່ສະອາດ ແລະ ປອດໄພ, ມີບ່ອນລ້າງມື ແລະ ສະບູ.<br>4.3 ໂຮງຮຽນມີສະພາບແວດລ້ອມທີ່ຖືກຫຼັກສຸຂະອະນາໄມ. | 4.4 ໂຮງຮຽນຮັບປະກັນໃຫ້ມີສະພາບແວດລ້ອມ ທີ່ສະອາດ ແລະ ປອດໄພ. |
| 5. ດ້ານການອະນາໄມສ່ວນບຸກຄົນ | 5.1 ໂຮງຮຽນ ໃຫ້ຄວາມຮູ້ ແລະ ເຝິກທັກສະໃນການຮັກສາອະນາໄມສ່ວນບຸກຄົນ ແກ່ນັກຮຽນ, ຄູ ແລະ ພໍ່ແມ່/ຜູ້ປົກຄອງ. | 5.2 ໂຮງຮຽນ ສົ່ງເສີມການຮັກສາອະນາໄມສ່ວນບຸກຄົນ. | 5.3 ໂຮງຮຽນຮັບປະກັນໃຫ້ນັກຮຽນມີພຶດຕິກຳທີ່ດີໃນການຮັກສາອະນາໄມສ່ວນບຸກຄົນ. |
| 6. ດ້ານການກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ | 6.1 50–70% ຂອງຈຳນວນນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ. | 6.2 71–80% ຂອງຈຳນວນນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ. | 6.3 81% ຂຶ້ນໄປ ຂອງຈຳນວນນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ. |

# ການປະເມີນ





## ການປະເມີນຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດວຽກນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ

ການປະເມີນຜົນເປັນສິ່ງທີ່ສຳຄັນ ແລະ ຈຳເປັນທີ່ສຸດເພື່ອສົ່ງເສີມການຈັດຕັ້ງປະຕິບັດ ວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ ແລະ ທັງເປັນການຮວບຮວມຂໍ້ມູນຕ່າງໆທີ່ສາມາດບັນລຸໄດ້ ແລະ ບໍ່ບັນລຸໄດ້ ຕາມຕົວຊີ້ບອກທີ່ກຳນົດໄວ້ໃນແຕ່ລະດ້ານ. ເພື່ອນຳສິ່ງບໍ່ສາມາດບັນລຸໄດ້ນັ້ນໄປປັບປຸງ, ແກ້ໄຂ ແລະ ວາງແຜນພັດທະນາໂຮງຮຽນຂອງຕົນໃຫ້ດີຂຶ້ນເທື່ອລະກ້າວ.

**ຂະບວນການປະເມີນຜົນ ແລະ ຄວາມຮັບຜິດຊອບ**

**ຄະນະຮັບຜິດຊອບ**

**ໄລຍະໃນການປະເມີນ**

**ເຄື່ອງມືໃນການປະເມີນ**



# ຂະບວນການປະເມີນຜົນ ແລະ ຄວາມຮັບຜິດຊອບ

**ຂະບວນການການປະເມີນ ແລະ ຄວາມຮັບຜິດຊອບ ວຽກງານດ້ານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນມີຂັ້ນຕອນດັ່ງນີ້:**

### ການປະເມີນ ຂັ້ນໂຮງຮຽນ

1. ສຶກສາຄົ້ນຄວ້າເນື້ອໃນປຶ້ມຄູ່ມືໃຫ້ເຂົ້າໃຈຢ່າງເລິກເຊິ່ງ.
2. ເຜີຍແຜ່ພາຍໃນໂຮງຮຽນ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ຮັບຮູ້ ແລະ ເຂົ້າໃຈ.
3. ດຳເນີນການປະເມີນ, ຈັດລຽງບັນຫາທີ່ເປັນບູລິມະສິດ ແລະ ວາງແຜນປັບປຸງແຕ່ລະໄລຍະ.
4. ຕິດຕາມ, ຊຸກຍູ້ ແລະ ປະເມີນການຈັດຕັ້ງປະຕິບັດແຜນໃນແຕ່ລະໄລຍະ.

### ການປະເມີນ ຂັ້ນເມືອງ/ນະຄອນ

1. ສັງລວມແບບປະເມີນຂອງແຕ່ລະໂຮງຮຽນ ແລະ ປ້ອນຂໍ້ມູນເຂົ້າໃນຖານຂໍ້ມູນ.
2. ເກັບຮັກສາ ແລະ ສົ່ງຖານຂໍ້ມູນ ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ເປັນປົກກະຕິ.
3. ຕີລາຄາຜົນການຈັດຕັ້ງປະຕິບັດໃນແຕ່ລະດ້ານຂອງແຕ່ລະໂຮງຮຽນ.
4. ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອໂຮງຮຽນ ເພື່ອປັບປຸງແກ້ໄຂ ແລະ ຢັ້ງຢືນຜົນການປະເມີນ.
5. ນຳເອົາຜົນການຈັດຕັ້ງປະຕິບັດ ມາຖອດຖອນບົດຮຽນຢູ່ໃນກອງປະຊຸມປະຈຳປີຂອງເມືອງ/ນະຄອນ.
6. ນຳເອົາຜົນການປະເມີນ ເຂົ້າໃນແຜນພັດທະນາການສຶກສາຂອງຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ.

### ການປະເມີນ ຂັ້ນແຂວງ/ນະຄອນຫຼວງ

1. ສັງລວມຂໍ້ມູນຂອງແຕ່ລະເມືອງ/ນະຄອນ ເຂົ້າໃນຖານຂໍ້ມູນຂອງແຂວງ/ນະຄອນຫຼວງ.
2. ເກັບຮັກສາ ແລະ ສົ່ງຖານຂໍ້ມູນ ໃຫ້ກົມການສຶກສາກ່ອນໄວຮຽນເປັນປົກກະຕິ.
3. ຕີລາຄາຜົນການຈັດຕັ້ງປະຕິບັດໃນແຕ່ລະດ້ານຂອງແຕ່ລະເມືອງ/ນະຄອນ.
4. ຕິດຕາມ, ຊຸກຍູ້ ຊ່ວຍເຫຼືອເມືອງ/ນະຄອນ ແລະ ໂຮງຮຽນ ເພື່ອປັບປຸງແກ້ໄຂ.
5. ນຳເອົາຜົນການຈັດຕັ້ງປະຕິບັດ ມາຖອດຖອນບົດຮຽນຢູ່ໃນກອງປະຊຸມປະຈຳປີຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ.
6. ນຳເອົາຜົນການປະເມີນ ເຂົ້າໃນແຜນພັດທະນາການສຶກສາຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ.

### ການປະເມີນ ຂັ້ນກະຊວງ

1. ສັງລວມ, ເກັບຮັກສາຂໍ້ມູນຂອງແຕ່ລະແຂວງ/ນະຄອນຫຼວງ ເຂົ້າໃນຖານຂໍ້ມູນຂອງກົມ.
2. ຕີລາຄາຜົນການຈັດຕັ້ງປະຕິບັດໃນແຕ່ລະດ້ານຂອງແຕ່ລະແຂວງ/ນະຄອນຫຼວງ.
3. ຕິດຕາມ, ຊຸກຍູ້ ຊ່ວຍເຫຼືອໃນແຕ່ລະຂັ້ນ ເພື່ອປັບປຸງແກ້ໄຂ.
4. ນຳເອົາຜົນການຈັດຕັ້ງປະຕິບັດ ມາຖອດຖອນບົດຮຽນຢູ່ໃນກອງປະຊຸມປະຈຳປີຂອງກົມ.
5. ນຳເອົາຜົນການປະເມີນ ເຂົ້າໃນແຜນພັດທະນາການສຶກສາຂອງຂັ້ນກົມ.
6. ລາຍງານຜົນການປະເມີນ ໃຫ້ລັດຖະມົນຕີຮັບຊາບເປັນປົກກະຕິ.



# ຄະນະຮັບຜິດຊອບ

## ຂັ້ນໂຮງຮຽນ

ຜູ້ອຳນວຍການໂຮງຮຽນ

ຄູສອນຜູ້ຮັບຜິດຊອບວຽກງານສົ່ງເສີມສຸຂະພາບ
→ 1 ທ່ານ

ຄະນະພັດທະນາການສຶກສາຂັ້ນບ້ານ
→ 1 ທ່ານ

ອາສາສະໝັກສົ່ງເສີມສຸຂະພາບຂັ້ນບ້ານ
→ 1 ທ່ານ

## ຂັ້ນເມືອງ/ນະຄອນ

ຄະນະຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ
ຜູ້ຊີ້ນຳວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ
→ 1 ທ່ານ

ຫົວໜ້າ/ຮອງຫົວໜ້າໜ່ວຍງານການສຶກສາກ່ອນໄວຮຽນ
→ 1 ທ່ານ

ຄູສຶກສານິເທດການສຶກສາກ່ອນໄວຮຽນ
→ 1 ທ່ານ

ວິຊາການຫ້ອງການສາທາລະນະສຸກເມືອງ/ນະຄອນ
ຜູ້ຮັບຜິດຊອບວຽກງານສົ່ງເສີມສຸຂະພາບ
→ 1 ທ່ານ

## ຂັ້ນແຂວງ/ນະຄອນຫຼວງ

ຄະນະພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ
ຜູ້ຊີ້ນຳວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ
→ 1 ທ່ານ

ຫົວໜ້າ/ຮອງຫົວໜ້າຂະແໜງການສຶກສາກ່ອນໄວຮຽນ ແລະ
ວິຊາການ ຜູ້ຮັບຜິດຊອບວຽກງານ ສົ່ງເສີມສຸຂະພາບໃນໂຮງຮຽນ
→ 2 ທ່ານ

ວິຊາການພະແນກສາທາລະນະສຸກແຂວງ/ນະຄອນຫຼວງ
ຜູ້ຮັບຜິດຊອບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ
→ 1 ທ່ານ

## ຂັ້ນສູນກາງ

**ກະຊວງສຶກສາທິການທິການ ແລະ ກິລາ:**

ຄະນະກົມການສຶກສາກ່ອນໄວຮຽນ
ຜູ້ຊີ້ນຳວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ
→ 1 ທ່ານ

ຄະນະພະແນກ ຜູ້ຊີ້ນຳວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ
→ 1 ທ່ານ

ວິຊາການ ຜູ້ຮັບຜິດຊອບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ
→ 1 ທ່ານ

ວິຊາການກົມສ້າງຄູ ຜູ້ຮັບຜິດຊອບວຽກງານສົ່ງເສີມສຸຂະພາບ
ໃນໂຮງຮຽນ
→ 1 ທ່ານ

ວິຊາການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
ຜູ້ຮັບຜິດຊອບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ
→ 1 ທ່ານ

**ກະຊວງສາທາລະນະສຸກ:**

ວິຊາການສູນໂພຊະນາການ
→ 1 ທ່ານ

ວິຊາການສູນຮັກສາສຸຂະພາບແມ່ ແລະ ເດັກ
→ 1 ທ່ານ

ວິຊາການສູນອະນາໄມສິ່ງແວດລ້ອມ ແລະ ຈັດຫານ້ຳສະອາດ
→ 1 ທ່ານ



# ວິທີການ ແລະ ໄລຍະຈັດຕັ້ງປະຕິບັດ




ໂຮງຮຽນປະເມີນຕົນເອງ ເລີ່ມແຕ່ທ້າຍເດືອນກັນຍາ ຈົນເຖິງເດືອນມີນາ ໂດຍແມ່ນຜູ້ອຳນວຍການ ຫຼື ຄູສອນຜູ້ທີ່ຮັບຜິດຊອບເປັນຜູ້ດຳເນີນການປະເມີນ. ການປະເມີນໃຫ້ດຳເນີນເປັນປົກກະຕິ, ພ້ອມທັງປັບປຸງລາຍການປະເມີນທີ່ຍັງບໍ່ທັນບັນລຸ. ຫຼັງຈາກນັ້ນ ໃຫ້ເຊີນຄະນະຮັບຜິດຊອບການປະເມີນຂັ້ນໂຮງຮຽນຮັບຮອງຜົນການປະເມີນ ທ້າຍເດືອນມີນາ ຂອງທຸກໆປີ ແລະ ສົ່ງແບບຟອມການປະເມີນ ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ 1 ສະບັບ ແລະ ໂຮງຮຽນສຳເນົາໄວ້ 1 ສະບັບ.

ພາຍຫຼັງທີ່ໄດ້ຮັບແບບຟອມຈາກຂັ້ນໂຮງຮຽນ ໃຫ້ກວດຄວາມຖືກຕ້ອງ ແລະ ຄົບຖ້ວນຕາມຄວາມເປັນຈິງ. ຈາກນັ້ນ ປ້ອນຂໍ້ມູນເຂົ້າຖານໃຫ້ສຳເລັດ ແລ້ວສົ່ງຖານຂໍ້ມູນ ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ບໍ່ໃຫ້ກາຍເດືອນເມສາ ຂອງທຸກໆປີ;

ເມື່ອໄດ້ຮັບຖານຂໍ້ມູນ ທີ່ຂັ້ນເມືອງສົ່ງມາ ໃຫ້ກວດຄວາມຖືກຕ້ອງ ແລະ ຄົບຖ້ວນ, ສັງລວມຂໍ້ມູນແຕ່ລະເມືອງ ເຂົ້າໃນຖານຂອງແຂວງ ແລະ ສົ່ງຂໍ້ມູນຂອງແຂວງ ໃຫ້ກົມການສຶກສາກ່ອນໄວຮຽນ ບໍ່ໃຫ້ກາຍເດືອນພຶດສະພາ ຂອງທຸກໆປີ.

ສັງລວມຂໍ້ມູນຂອງແຕ່ລະແຂວງເຂົ້າໃນຖານຂອງກົມການສຶກສາກ່ອນໄວຮຽນ ພ້ອມທັງລາຍງານໃຫ້ລັດຖະມົນຕີ ໃນເດືອນມິຖຸນາ ແລະ ນຳເອົາຜົນສຳເລັດໄປ ລາຍງານໃນກອງປະຊຸມຂອງຂະແໜງການຍ່ອຍການສຶກສາກ່ອນໄວຮຽນ ທຸກໆປີ.

# ເຄື່ອງມືໃນການປະເມີນ

**ເຄື່ອງມືທີ່ໃຊ້ເພື່ອປະເມີນມາດຕະຖານນ້ຳ ແລະ ສຸຂະອະນາໄມໃນການສຶກສາເດັກນ້ອຍປະກອບມີ:**



ເຄື່ອງມືປະເມີນ ມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ



ຕາຕາລາງອະທິບາຍຕົວຊີ້ບອກ ແລະ ຫຼັກຖານການປະເມີນ:

1. ດ້ານນ້ຳໃຊ້
2. ດ້ານນ້ຳດື່ມສະອາດປອດໄພ
3. ດ້ານວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍ
4. ດ້ານສະພາບແວດລ້ອມ
5. ດ້ານການອະນາໄມສ່ວນບຸກຄົນ
6. ດ້ານການກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ



ຕາຕາລາງ ສະແດງຜົນການປະເມີນ ມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ

# ມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນໂດຍນຳໃຊ້ຮູບແບບ 3 ດາວ

## 1. ດ້ານນ້ຳໃຊ້

| ★ | ★★ | ★★★ |
|---|---|---|
| **1.1 ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ມີນ້ຳໃຊ້ພຽງພໍທຸກວັນແຕ່ໄດ້ນຳໃຊ້ແຫຼ່ງນ້ຳຢູ່ນອກໂຮງຮຽນ:**<br>1.1.1 ໂຮງຮຽນມີນ້ຳໃຊ້ ແລະ ໄດ້ນຳໃຊ້ພຽງພໍສຳລັບທຸກກິດຈະກຳ.<br><br>**1.2 ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ມີບ່ອນຊຶມໃຊ້ນ້ຳທີ່ສະດວກ:**<br>1.2.1 ບ່ອນຊຶມໃຊ້ນ້ຳມີຄວາມສະດວກ. | **1.3 ໂຮງຮຽນມີແຫຼ່ງນ້ຳໃຊ້ທີ່ໄດ້ຮັບການປັບປຸງ ແຕ່ບໍ່ພໍໃຊ້ຕະຫຼອດສົກຮຽນ ຕ້ອງໄດ້ນຳໃຊ້ຈາກແຫຼ່ງອື່ນ:**<br>1.3.1 ນ້ຳທີ່ເອົາມານຳໃຊ້ໃນໂຮງຮຽນແມ່ນໄດ້ຈາກແຫຼ່ງນ້ຳທີ່ໄດ້ຮັບການປັບປຸງແລ້ວ.<br>1.3.2 ໂຮງຮຽນມີນ້ຳໃຊ້ ພຽງພໍສຳລັບທຸກກິດຈະກຳ ຕະຫຼອດສົກຮຽນ.<br><br>**1.4 ມີການປົກປັກຮັກສາ ສ້ອມແປງລະບົບນ້ຳ ແລະ ພາຊະນະ ນຳໃຊ້ໄດ້ປົກກະຕິ:**<br>1.4.1 ລະບົບນ້ຳໃຊ້ງານໄດ້ປົກກະຕິ.<br>1.4.2 ພາຊະນະໃສ່ນ້ຳສະອາດ. | **1.5 ຮັບປະກັນໃຫ້ມີແຫຼ່ງນ້ຳໃຊ້ ທີ່ໄດ້ຮັບການປັບປຸງ, ສະອາດ ແລະ ສາມາດນຳໃຊ້ພຽງພໍຕະຫຼອດສົກຮຽນ:**<br>1.5.1 ແຫຼ່ງນ້ຳໃນໂຮງຮຽນໃຊ້ໄດ້ພຽງພໍຕະຫຼອດປີ (ປະມານ10-25 ລິດ/ຄົນ/ມື້).<br>1.5.2 ແຫຼ່ງນ້ຳໃນໂຮງຮຽນ ເປັນແຫຼ່ງນ້ຳທີ່ໄດ້ຮັບການປັບປຸງແລ້ວ.<br>1.5.3 ນ້ຳໃຊ້ສະອາດ.<br><br>**1.6 ນັກຮຽນທຸກຄົນ ລວມທັງນັກຮຽນພິການ ສາມາດນຳໃຊ້ນ້ຳໄດ້ຢ່າງສະດວກ ແລະ ປອດໄພ:**<br>1.6.1 ນັກຮຽນປົກກະຕິສາມາດເຂົ້າເຖິງບ່ອນຊຶມໃຊ້ນ້ຳໄດ້ສະດວກ ແລະ ປອດໄພ.<br>1.6.2 ນັກຮຽນພິການສາມາດເຂົ້າເຖິງບ່ອນຊຶມໃຊ້ນ້ຳໄດ້ຢ່າງສະດວກ ແລະ ປອດໄພ. |

6 ຕົວຊີ້ບອກ
11 ລາຍການປະເມີນ



## 2. ດ້ານນ້ຳດື່ມສະອາດປອດໄພ

| ★ | ★★ | ★★★ |
|---|---|---|
| **2.1 ນັກຮຽນທຸກຄົນໄດ້ດື່ມນ້ຳຢູ່ໃນໂຮງຮຽນ:**<br>2.1.1 ກຮຽນທຸກຄົນໄດ້ດື່ມນ້ຳຢູ່ໃນໂຮງຮຽນ.<br><br>**2.2 ພາຊະນະໃສ່ນ້ຳດື່ມ ມີຄວາມສະອາດ ຢູ່ສະເໝີ:**<br>2.2.1 ພາຊະນະໃສ່ນ້ຳດື່ມ ຫຼື ຈອກຂອງນັກຮຽນສະອາດ.<br>2.2.2 ມີຜູ້ຕິດຕາມຄວາມສະອາດຂອງພາຊະນະໃສ່ນ້ຳດື່ມ. | **2.3 ນັກຮຽນ ໄດ້ດື່ມນ້ຳທີ່ສະອາດ ແລະ ປອດໄພ ຢ່າງໜ້ອຍ ເຄິ່ງລິດ/ຄົນ/ມື້:**<br>2.3.1 ໂຮງຮຽນສາມາດສະໜອງນ້ຳດື່ມທີ່ສະອາດ ແລະ ປອດໄພໃຫ້ນັກຮຽນໄດ້ດື່ມ ຢ່າງໜ້ອຍ 0.5 ລິດ/ຄົນ/ມື້.<br>2.3.2 ພໍ່ແມ່/ຜູ້ປົກຄອງ ຫຼື ໂຮງຮຽນໄດ້ເອົານ້ຳດື່ມທີ່ສະອາດ ແລະ ປອດໄພ ມາໃຫ້ນັກຮຽນດື່ມແຕ່ລະມື້.<br><br>**2.4 ບ່ອນວາງນ້ຳດື່ມສະດວກ ແລະ ປອດໄພ ສຳລັບນັກຮຽນທຸກຄົນ:**<br>2.4.1 ບ່ອນວາງນ້ຳດື່ມເໝາະສົມກັບສ່ຳອາຍຸ, ປອດໄພ ແລະ ສາມາດເອົານ້ຳດື່ມໄດ້.<br>2.4.2 ພາຊະນະໃສ່ນ້ຳດື່ມສະອາດ ແລະ ພຽງພໍສຳລັບທຸກຄົນ. | **2.5 ໂຮງຮຽນ ຮັບປະກັນໃຫ້ມີນ້ຳດື່ມທີ່ສະອາດ, ປອດໄພ ແລະ ພຽງພໍ (1 ລິດ/ຄົນ/ມື້):**<br>2.5.1 ໂຮງຮຽນສະໜອງນ້ຳດື່ມສະອາດ, ປອດໄພ ແລະ ພຽງພໍ 1 ລິດ/ຄົນ/ມື້.<br>2.5.2 ໄດ້ກວດຄຸນນະພາບນ້ຳດື່ມຢ່າງໜ້ອຍປີລະ 1 ຄັ້ງ. |



5 ຕົວຊີ້ບອກ
9 ລາຍການປະເມີນ

## 3. ດ້ານວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍ

4 ຕົວຊີ້ບອກ
12 ລາຍການປະເມີນ

| ★ | ★★ | ★★★ |
|---|---|---|
| **3.1 ໂຮງຮຽນມີວິດຖ່າຍ, ບ່ອນທຳຄວາມສະອາດຮ່າງກາຍ,ບ່ອນລ້າງມືເປັນກຸ່ມ ທີ່ສະອາດ ແລະ ປອດໄພ:**<br>3.1.1 ມີວິດຖ່າຍ ແລະ ບ່ອນລ້າງມືເປັນກຸ່ມ.<br>3.1.2 ມີບ່ອນທຳຄວາມສະອາດຮ່າງກາຍ.<br>3.1.3 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດຮ່າງກາຍມີຄວາມສະອາດ.<br>3.1.4 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດ.<br><br>**3.2 ມີການປົກປັກຮັກສາ ແລະ ສ້ອມແປງວິດຖ່າຍ, ບ່ອນລ້າງມື ແລະ ບ່ອນທຳຄວາມສະອາດຮ່າງກາຍໃຫ້ໃຊ້ໄດ້ປົກກະຕິ:**<br>3.2.1 ຕາຕະລາງອະນາໄມປະຈຳວັນ.<br>3.2.2 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດຮ່າງກາຍໃຊ້ໄດ້ປົກກະຕິ. | **3.3 ມີວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍໄດ້ຮັບການປັບປຸງ ແລະ ເໝາະສົມກັບສ່ຳອາຍຸຂອງເດັກ ແລະ ໃຊ້ໄດ້ເປັນປົກກະຕິ:**<br>3.3.1 ຫ້ອວິດ ແລະ ບ່ອນທຳຄວາມສະອາດຮ່າງກາຍ ເໝາະສົມ ກັບ ສ່ຳອາຍຸຂອງນັກຮຽນ ແລະ ປອດໄພ.<br>3.3.2 ຢູ່ບໍລິເວນໃກ້ວິດຖ່າຍມີບ່ອນລ້າງມືສ່ວນບຸກຄົນ ມີສະບູ ແລະ ນ້ຳ. | **3.4 ໂຮງຮຽນຮັບປະກັນໃຫ້ ມີຫ້ອວິດຖ່າຍ, ຫ້ອງອາບນ້ຳເໝາະສົມກັບຈຳນວນນັກຮຽນ, ສະດວກສຳລັບເດັກພິການ ແລະ ມີບ່ອນຍ່ຽວສຳລັບນັກຮຽນຊາຍ ພ້ອມທັງນຳໃຊ້ເປັນປົກກະຕິ:**<br>3.4.1 ສະເລ່ຍຈຳນວນນັກຮຽນ ກັບຫ້ອວິດຖ່າຍ ບໍ່ເກີນ 30 ຄົນຕໍ່ຫ້ອວິດ.<br>3.4.2 ມີວິດຖ່າຍທີ່ນັກຮຽນພິການສາມາດນຳໃຊ້ໄດ້.<br>3.4.3 ມີໂຖ/ຮາງຍ່ຽວເໝາະສົມສຳລັບນັກຮຽນຊາຍ.<br>3.4.4 ມີບ່ອນທຳຄວາມສະອາດຮ່າງກາຍເປັນຫ້ອງສະເພາະແຍກຍິງ-ຊາຍ ຫຼື ໄດ້ຜັດປ່ຽນກັນອາບຕາມ ເພດ. |







## 4. ດ້ານສະພາບແວດລ້ອມ

| ★ | ★★ | ★★★ |
|---|---|---|
| **4.1 ໃນ ແລະ ນອກຫ້ອງຮຽນມີຄວາມສະອາດ ແລະ ປອດໄພ:**<br>4.1.1 ໃນ ແລະ ນອກຫ້ອງຮຽນມີຄວາມສະອາດ ແລະ ປອດໄພ.<br>4.1.2 ນອກຫ້ອງຮຽນມີກະຕ່າໃສ່ຂີ້ເຫຍື້ອ.<br>4.1.3 ມີຕາຕະລາງອະນາໄມໃນ ແລະ ນອກຫ້ອງຮຽນ. | **4.2 ຫ້ອງຄົວ ຫຼື ບ່ອນທີ່ເດັກກິນເຂົ້າ ທີ່ສະອາດ ແລະ ປອດໄພ, ມີບ່ອນລ້າງມື ແລະ ສະບູ:**<br>4.2.1 ຫ້ອງຄົວ ຫຼື ບ່ອນກິນເຂົ້າ ມີຄວາມສະອາດ ແລະ ຄວາມເປັນລະບຽບ.<br>4.2.2 ຢູ່ໃກ້ຫ້ອງຄົວ ຫຼື ບ່ອນກິນເຂົ້າ ມີບ່ອນລ້າງມື ແລະ ສະບູ.<br><br>**4.3 ໂຮງຮຽນມີສະພາບແວດລ້ອມທີ່ຖືກຫຼັກສຸຂະອະນາໄມ:**<br>4.3.1 ໂຮງຮຽນມີລະບົບລະບາຍນ້ຳເປື້ອນທີ່ໃຊ້ໄດ້.<br>4.3.2 ມີການກຳຈັດແຫຼ່ງເພາະພັນຍຸງລາຍ.<br>4.3.3 ໂຮງຮຽນໄດ້ແຍກ ແລະ ກຳຈັດຂີ້ເຫຍື້ອ.<br>4.3.4 ມີອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ໃນການອະນາໄມໄດ້ນຳໃຊ້ເປັນປົກກະຕິ. | **4.4 ໂຮງຮຽນຮັບປະກັນໃຫ້ມີສະພາບແວດລ້ອມ ທີ່ສະອາດ ແລະ ປອດໄພ:**<br>4.4.1 ມີການປະສານງານ ແລະ ຮ່ວມມືກັບຄະນະພັດທະນາການສຶກສາຂັ້ນບ້ານ.<br>4.4.2 ວຽກງານສະພາບແວດລ້ອມໄດ້ບັນຈຸໃນແຜນພັດທະນາໂຮງຮຽນ. |

4 ຕົວຊີ້ບອກ
11 ລາຍການປະເມີນ

## 5. ດ້ານການອະນາໄມສ່ວນບຸກຄົນ



| ★ | ★★ | ★★★ |
|---|---|---|
| **5.1 ໂຮງຮຽນ ໃຫ້ຄວາມຮູ້ ແລະ ເຝິກທັກສະໃນການຮັກສາອະນາໄມສ່ວນບຸກຄົນ ແກ່ນັກຮຽນ, ຄູ ແລະ ພໍ່ແມ່/ຜູ້ປົກຄອງ:**<br>5.1.1 ຜູ້ອຳນວຍການໄດ້ເຜີຍແຜ່ການຮັກສາອະນາໄມສ່ວນບຸກຄົນໃຫ້ຄູ, ນັກຮຽນ ແລະ ພໍ່ແມ່/ຜູ້ປົກຄອງ.<br>5.1.2 ຄູປະຈຳຫ້ອງໄດ້ກວດກາຄວາມສະອາດຂອງນັກຮຽນທຸກວັນ.<br>5.1.3 ຄູນຳພານັກຮຽນທຸກຄົນໄດ້ລ້າງມືໃສ່ສະບູເປັນກຸ່ມທຸກວັນ.<br>5.1.4 ນັກຮຽນໄດ້ຮັບການອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາ.<br>5.1.5 ຜູ້ປຸງແຕ່ງອາຫານ ຫຼື ຜູ້ກະກຽມອາຫານລ້າງມືໃສ່ສະບູ ກ່ອນ-ຫຼັງປຸງແຕ່ງອາຫານທຸກຄັ້ງ. | **5.2 ໂຮງຮຽນ ສົ່ງເສີມການຮັກສາອະນາໄມສ່ວນບຸກຄົນ:**<br>5.2.1 ນັກຮຽນທຸກຄົນລ້າງມືໃສ່ສະບູກ່ອນ-ຫຼັງກິນອາຫານ ແລະ ຫຼັງຈາກຈັບບາຍສິ່ງເປື້ອນເປິທຸກຄັ້ງ.<br>5.2.2 ນັກຮຽນທຸກຄົນໄດ້ລ້າງມື ແລະ ຖູແຂ້ວເປັນກຸ່ມທຸກວັນ.<br>5.2.3 ນັກຮຽນທຸກຄົນໄດ້ຮັບການອະນາໄມຮ່າງກາຍ ເວລາຖ່າຍໜັກ ຫຼື ຖ່າຍເບົາ. | **5.3 ໂຮງຮຽນຮັບປະກັນໃຫ້ນັກຮຽນມີພຶດຕິກຳທີ່ດີໃນການຮັກສາອະນາໄມສ່ວນບຸກຄົນ:**<br>5.3.1 ນັກຮຽນອະນຸບານ 3 ທຸກຄົນ ໄດ້ລ້າງມືໃສ່ສະບູດ້ວຍຕົນເອງ ຫຼັງໃຊ້ວິດຖ່າຍ, ກ່ອນ-ຫຼັງກິນ ອາຫານ ແລະ ຫຼັງຈາກການຫຼິ້ນ.<br>5.3.2 ນັກຮຽນອະນຸບານ 3 ທຸກຄົນ ໄດ້ອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາດ້ວຍຕົນເອງ.<br>5.3.3 ນັກຮຽນທຸກຄົນມີຄວາມສະອາດທາງດ້ານຮ່າງກາຍ ແລະ ເຄື່ອງນຸ່ງ. |

3 ຕົວຊີ້ບອກ
11 ລາຍການປະເມີນ

3 ຕົວຊີ້ບອກ
4 ລາຍການປະເມີນ

## 6. ດ້ານການກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ

| ★ | ★★ | ★★★ |
|---|---|---|
| **6.1 50–70% ຂອງຈຳນວນນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ:**<br>6.1.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 50–70% .<br>6.1.2 ໂຮງຮຽນມີຖານຂໍ້ມູນຂອງນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ. | **6.2 71–80% ຂອງຈຳນວນນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ:**<br>6.2.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 71–80%. | **6.3 81% ຂຶ້ນໄປ ຂອງຈຳນວນນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ:**<br>6.3.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 81% ຂຶ້ນໄປ. |



**6 ດ້ານ**
**25 ຕົວຊີ້ບອກ**
**58 ລາຍການປະເມີນ**

# ຕາຕະລາງ ອະທິບາຍຕົວຊີ້ບອກ ແລະ<br>ຫຼັກຖານການປະເມີນ ສຳລັບສະຖານການສຶກສາກ່ອນໄວຮຽນ

## 1. ດ້ານນ້ຳໃຊ້

| ຕົວຊີ້ວັດແລະລາຍການການປະເມີນຜົນ | | ຄຳອະທິບາຍຄຳສັບຕົວຊີ້ບອກ | ຫຼັກຖານ |
|---|---|---|---|
| ★ | | | |
| **1.1 ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ມີນ້ຳໃຊ້ພຽງພໍທຸກອັນແຕ່ໄດ້ນຳໃຊ້ແຫຼ່ງນ້ຳຢູ່ນອກໂຮງຮຽນ.** | 1.1.1 ໂຮງຮຽນມີນ້ຳໃຊ້ ແລະ ໄດ້ນຳໃຊ້ພຽງພໍສຳລັບທຸກກິດຈະກຳ. | • ແຫຼ່ງນ້ຳຢູ່ນອກໂຮງຮຽນໝາຍເຖິງ: ນ້ຳລິນ, ນ້ຳປະປາ, ນ້ຳບາດານ, ນ້ຳສ້າງ ທີ່ໄດ້ຮັບການປັບປຸງ ແລະ ໂຮງຮຽນມີນ້ຳໃຊ້ສຳລັບກິດຈະກຳລ້າງມື, ລ້າງວິດຖ່າຍ ແລະ ນ້ຳອາບ ໂດຍຊຸມຊົນຊ່ວຍຈັດຫາໃຫ້ມີນ້ຳໃຊ້ໃນໂຮງຮຽນ. | • ສັງເກດຖັງເກັບນ້ຳມີນ້ຳໃຊ້ ຫຼື ບໍ່.<br>• ສັງເກດ ແລະ ສອບຖາມນັກຮຽນ. |
| **1.2 ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານມີບ່ອນຊຶມໃຊ້ນ້ຳທີ່ສະດວກ.** | 1.2.1 ບ່ອນຊຶມໃຊ້ນ້ຳມີຄວາມສະດວກ. | • ບ່ອນຊຶມໃຊ້ນ້ຳທີ່ມີຄວາມສະດວກ ໝາຍເຖິງ ສາມາດເຂົ້າເຖິງໄດ້ງ່າຍ ແລະ ເໝາະສົມກັບຊ່ວງອາຍຸຂອງນັກຮຽນ ບ່ອນຊຶມໃຊ້ນ້ຳທີ່ມີຄວາມປອດໄພ<br>• ໝາຍເຖິງ ບໍ່ມີສິ່ງທີ່ເປັນອັນຕະລາຍຕໍ່ນັກຮຽນ ແລະ ຫຼີກລ້ຽງອຸບັດເຫດທີ່ຈະເກີດຂຶ້ນ. | • ສັງເກດບ່ອນຊຶມໃຊ້ນ້ຳ. |
| ★★ | | | |
| **1.3 ໂຮງຮຽນມີແຫຼ່ງນ້ຳໃຊ້ທີ່ໄດ້ຮັບການປັບປຸງ ແຕ່ບໍ່ພໍໃຊ້ຕະຫຼອດສົກຮຽນ ຕ້ອງໄດ້ນຳໃຊ້ຈາກແຫຼ່ງອື່ນ.** | 1.3.1 ນ້ຳທີ່ເອົາມານຳໃຊ້ໃນໂຮງຮຽນ ແມ່ນໄດ້ຈາກແຫຼ່ງນ້ຳທີ່ໄດ້ຮັບການປັບປຸງແລ້ວ.<br>1.3.2 ໂຮງຮຽນມີນ້ຳໃຊ້ພຽງພໍສຳລັບທຸກກິດຈະກຳຕະຫຼອດສົກຮຽນ. | • ໂຮງຮຽນມີແຫຼ່ງນ້ຳໄດ້ຮັບການປັບປຸງ ໝາຍເຖິງ: ນ້ຳລິນ, ນ້ຳປະປາ, ສຳລັບນ້ຳບາດານ ແລະ ນ້ຳສ້າງທີ່ມີແຄ່ງ(ແທ່ງນ້ຳສ້າງ), ມີຫຼັງຄາ, ມີຮົ້ວອ້ອມທີ່ແໜ້ນໜາ ມີຝາປິດ ແລະ ເຫກັນເປື້ອນ.<br>• ໃນໄລຍະຂາດນ້ຳໂຮງຮຽນໄດ້ເອົານ້ຳມາຈາກບ່ອນອື່ນ ມາໃຊ້ ເພື່ອໃຫ້ໂຮງຮຽນມີນ້ຳໃຊ້ເຮັດກິດຈະກຳຕະຫຼອດສົກຮຽນ. | • ສັງເກດ ແຫຼ່ງນ້ຳໃຊ້.<br>• ສອບຖາມຄູ. |
| **1.4 ມີການປົກປັກຮັກສາ ສ້ອມແປງລະບົບນ້ຳ ແລະ ພາຊະນະ ນຳໃຊ້ໄດ້ປົກກະຕິ.** | 1.4.1 ລະບົບນ້ຳໃຊ້ງານໄດ້ປົກກະຕິ.<br>1.4.2 ພາຊະນະໃສ່ນ້ຳສະອາດ. | • ການປົກປັກຮັກສາ ແລະ ການສ້ອມແປງ ໝາຍເຖິງການຕິດຕາມລະບົບນ້ຳ ແລະ ພາຊະນະມີການສ້ອມແປງໃນເວລາເປ່ເພ ເພື່ອໃຫ້ໃຊ້ງານໄດ້ປົກກະຕິ (ບໍ່ຮົ່ວຊຶມ ຫຼື ແຕກແຫງ, ປິດ-ເປີດໄດ້) ແລະ ສະອາດ (ບໍ່ມີຄາບເປື້ອນ, ບໍ່ມີຕົມ). | • ມີການບັນທຶກການຕິດ ຕາມ ແລະ ການສ້ອມແປງ.<br>• ສັງເກດລະບົບນ້ຳ ແລະ ພາຊະນະ.<br>• ສັງເກດຄວາມສະອາດຂອງພາຊະນະໃສ່ນ້ຳ. |

>>





| ຕົວຊີ້ວັດແລະລາຍການການປະເມີນຜົນ | | ຄຳອະທິບາຍຄຳສັບຕົວຊີ້ບອກ | ຫຼັກຖານ |
|---|---|---|---|
| ★★★ | | | |
| **1.5 ຮັບປະກັນໃຫ້ມີແຫຼ່ງນ້ຳໃຊ້ທີ່ໄດ້ຮັບການປັບປຸງ, ສະອາດ ແລະ ສາມາດນຳໃຊ້ພຽງພໍຕະຫຼອດສົກຮຽນ.** | 1.5.1 ແຫຼ່ງນ້ຳໃນໂຮງຮຽນໃຊ້ໄດ້ພຽງພໍຕະຫຼອດປີ (ປະມານ10-25 ລິດ/ຄົນ/ມື້).<br>1.5.2 ແຫຼ່ງນ້ຳໃນໂຮງຮຽນ ເປັນແຫຼ່ງນ້ຳທີ່ໄດ້ຮັບການປັບປຸງແລ້ວ.<br>1.5.3 ນ້ຳໃຊ້ສະອາດ. | • ແຫຼ່ງນ້ຳທີ່ໄດ້ຮັບການປັບປຸງໝາຍເຖິງ: ນ້ຳລິນ, ນ້ຳປະປາ, ສຳລັບນ້ຳບາດານ ແລະ ນ້ຳສ້າງທີ່ມີແຄ່ງ(ແທ່ງນ້ຳສ້າງ), ມີຫຼັງຄາ, ມີຮົ້ວອ້ອມທີ່ແໜ້ນໜາ, ມີຝາປິດ, ເຫກັນເປື້ອນ ແລະ ຫ່າງຈາກວິດຖ່າຍ 30 ແມັດ.<br>• ນ້ຳໃຊ້ສະອາດໝາຍເຖິງ ບໍ່ມີສີ, ບໍ່ມີກິ່ນ, ບໍ່ມີລົດຊາດ ຈາກແຫຼ່ງນ້ຳທີ່ໄດ້ຮັບການປັບປຸງ.<br>• ນ້ຳໃຊ້ພຽງພໍຕະຫຼອດສົກຮຽນ ໝາຍເຖິງ ປະລິມານ 10-25 ລິດ/ຄົນ/ມື້ ສຳລັບເຮັດກິດຈະກຳຕ່າງໆ. | • ສັງເກດແຫຼ່ງນ້ຳຕົວຈິງ. |
| **1.6 ນັກຮຽນທຸກຄົນລວມທັງນັກຮຽນພິການ ສາມາດນຳໃຊ້ນ້ຳໄດ້ຢ່າງສະດວກ ແລະ ປອດໄພ.** | 1.6.1 ນັກຮຽນປົກກະຕິສາມາດເຂົ້າເຖິງບ່ອນຊຶມໃຊ້ນ້ຳໄດ້ສະດວກ ແລະ ປອດໄພ.<br>1.6.2 ນັກຮຽນພິການສາມາດເຂົ້າເຖິງບ່ອນຊຶມໃຊ້ນ້ຳໄດ້ຢ່າງສະດວກ ແລະ ປອດໄພ. | • ນັກຮຽນທຸກຄົນ ລວມທັງນັກຮຽນພິການ ສາມາດ ໃຊ້ນ້ຳໄດ້ສະດວກ ແລະ ບໍ່ມີຄວາມສ່ຽງຕໍ່ອຸບັດເຫດໃດໆ ເຊັ່ນ: ບ່ອນຊຶມໃຊ້ນ້ຳຕັ້ງຢູ່ບ່ອນທີ່ນັກຮຽນເອົາໄດ້ງ່າຍ, ບໍ່ສູງເກີນໄປ, ແໜ້ນໜາ ແລະ ຮັບນ້ຳໜັກໄດ້, ມີທາງລາດເນີນສຳລັບນັກຮຽນພິການ.<br>• ນັກຮຽນພິການໝາຍເຖິງ ນັກຮຽນທີ່ມີຄວາມບົກຜ່ອງທາງດ້ານໜ້າທີ່ການໃດໜຶ່ງ. | • ສັງເກດທີ່ຕັ້ງຂອງບ່ອນຊຶມໃຊ້ນ້ຳ. |



## 2. ດ້ານນ້ຳດື່ມສະອາດປອດໄພ

| ຕົວຊີ້ວັດແລະລາຍການການປະເມີນຜົນ | | ຄຳອະທິບາຍຄຳສັບຕົວຊີ້ບອກ | ຫຼັກຖານ |
|---|---|---|---|
| ★ | | | |
| 2.1 ນັກຮຽນທຸກຄົນໄດ້ດື່ມນ້ຳຢູ່ໃນໂຮງຮຽນ. | 2.1.1 ກຮຽນທຸກຄົນໄດ້ດື່ມນ້ຳຢູ່ໃນໂຮງຮຽນ. | • ນ້ຳດື່ມສະອາດໝາຍເຖິງ ນ້ຳທີ່ຜ່ານການບຳບັດເຊັ່ນ: ການຕົ້ມ, ການກັ່ນຕອງ ແລະ ການຂ້າເຊື້ອດ້ວຍວິທີຕ່າງໆ, ນ້ຳດື່ມຈາກໂຮງງານ, ໂດຍແມ່ນ ໂຮງຮຽນ ຫຼື ພໍ່ແມ່/ຜູ້ປົກຄອງສະໜອງໃຫ້. | • ສອບຖາມອຳນວຍການ, ຄູ ແລະ ນັກຮຽນ.<br>• ສັງເກດພາຊະນະໃສ່ນ້ຳດື່ມຂອງນັກຮຽນ. |
| 2.2 ພາຊະນະໃສ່ນ້ຳດື່ມມີຄວາມສະອາດ ຢູ່ສະເໝີ.<br> | 2.2.1 ພາຊະນະໃສ່ນ້ຳດື່ມ ຫຼື ຈອກຂອງນັກຮຽນສະອາດ.<br>2.2.2 ມີຜູ້ຕິດຕາມຄວາມສະອາດຂອງພາຊະນະໃສ່ນ້ຳດື່ມ. | • ພາຊະນະໃສ່ນ້ຳດື່ມສະອາດ ໝາຍເຖິງ ບໍ່ມີຄາບເປື້ອນເປີທັງໃນ ແລະ ນອກ, ມີຝາປິດ.<br>• ໃນກໍລະນີໂຮງຮຽນສະໜອງນ້ຳດື່ມລວມ ນັກຮຽນແຕ່ລະຄົນຕ້ອງມີພາຊະນະໃສ່ນ້ຳດື່ມທີ່ສະອາດ (ຈອກ, ຕຸກນ້ຳ, ຖາດວາງຈອກ ແລະ ອື່ນໆ).<br>• ຄູ ອະນາໄມພາຊະນະໃສ່ນ້ຳດື່ມຂອງນັກຮຽນ ຢ່າງເປັນປົກກະຕິ. | • ສັງເກດພາຊະນະໃສ່ນ້ຳຂອງນັກຮຽນ(ຈອກ, ຕຸກນ້ຳ, ຖາດວາງຈອກ...).<br>• ເບິ່ງການບັນທຶກຂອງຜູ້ຕິດຕາມ. |
| ★★ | | | |
| 2.3 ນັກຮຽນ ໄດ້ດື່ມນ້ຳທີ່ສະອາດ ແລະ ປອດໄພ ຢ່າງໜ້ອຍ ເຄິ່ງລິດ/ຄົນ/ມື້. | 2.3.1 ໂຮງຮຽນສາມາດສະໜອງນ້ຳດື່ມທີ່ສະອາດ ແລະ ປອດໄພໃຫ້ນັກຮຽນໄດ້ດື່ມ ຢ່າງໜ້ອຍ 0.5 ລິດ/ຄົນ/ມື້.<br>2.3.2 ພໍ່ແມ່/ຜູ້ປົກຄອງ ຫຼື ໂຮງຮຽນໄດ້ເອົານ້ຳດື່ມທີ່ສະອາດ ແລະ ປອດໄພ ມາໃຫ້ນັກຮຽນດື່ມແຕ່ລະມື້. | • ໂຮງຮຽນມີນ້ຳດື່ມທີ່ສະອາດ ແລະ ປອດໄພໃຫ້ນັກຮຽນທຸກຄົນໄດ້ດື່ມ ເຄິ່ງ ລິດ/ຄົນ/ມື້. | • ສອບຖາມຄູກ່ຽວກັບປະລິມານນ້ຳດື່ມທີ່ທາງໂຮງຮຽນສະໜອງໃຫ້ນັກຮຽນ<br>• ສັງເກດພາຊະນະໃສ່ນ້ຳທີ່ພໍ່ແມ່/ຜູ້ປົກຄອງ ຫຼື ໂຮງຮຽນ ກຽມໃຫ້ນັກຮຽນ. |
| 2.4 ບ່ອນວາງນ້ຳດື່ມສະດວກ ແລະ ປອດໄພ ສຳລັບນັກຮຽນທຸກຄົນ. | 2.4.1 ບ່ອນວາງນ້ຳດື່ມເໝາະສົມກັບສ່ຳອາຍຸ, ປອດໄພ ແລະ ສາມາດເອົານ້ຳດື່ມໄດ້.<br>2.4.2 ພາຊະນະໃສ່ນ້ຳດື່ມສະອາດ ແລະ ພຽງພໍສຳລັບທຸກຄົນ. | • ບ່ອນວາງນ້ຳດື່ມສະດວກ ໝາຍເຖິງບ່ອນທີ່ນັກຮຽນທຸກຄົນສາມາດເຂົ້າເຖິງໄດ້ງ່າຍ,<br>• ບ່ອນວາງນ້ຳດື່ມທີ່ມີປອດໄພ ໝາຍເຖິງ ມີຄວາມແໜ້ນໜາ, ສະອາດ ແລະ ມີແສງສະຫວ່າງພຽງພໍ. | • ສັງເກດບ່ອນວາງນ້ຳດື່ມ ແລະ ພາຊະນະໃສ່ນ້ຳດື່ມ. |
| ★★★ | | | |
| 2.5 ໂຮງຮຽນ ຮັບປະກັນໃຫ້ມີນ້ຳດື່ມທີ່ສະອາດ, ປອດໄພ ແລະ ພຽງພໍ (1 ລິດ/ຄົນ/ມື້). | 2.5.1 ໂຮງຮຽນສະໜອງນ້ຳດື່ມສະອາດ, ປອດໄພ ແລະ ພຽງພໍ 1 ລິດ/ຄົນ/ມື້.<br>2.5.2 ໄດ້ກວດຄຸນນະພາບນ້ຳດື່ມຢ່າງໜ້ອຍປີລະ 1 ຄັ້ງ. | • ໂຮງຮຽນສາມາດສະໜອງນ້ຳດື່ມສະອາດ ແລະ ປອດໄພ ພຽງພໍໃຫ້ນັກຮຽນທຸກຄົນ ຈຳນວນ ໜຶ່ງ ລິດ/ຄົນ/ມື້.<br>• ການກວດຄຸນນະພາບນ້ຳໝາຍເຖິງການເອົານ້ຳດື່ມທີ່ໂຮງຮຽນສະໜອງໃຫ້ນັກຮຽນໄປກວດ (ຍົກເວັ້ນນ້ຳດື່ມທີ່ໄດ້ຖືກຮັບຮອງຈາກກົມອາຫານ ແລະ ຢາ ຫຼື ໜ່ວຍງານທີ່ກ່ຽວຂ້ອງ). | • ສອບຖາມຄູກ່ຽວກັບປະລິມານນ້ຳດື່ມທີ່ ໂຮງຮຽນສະໜອງໃຫ້ນັກຮຽນ (ຄິດໄລ່ຈຳນວນ ໜຶ່ງ ລິດ/ຄົນ/ມື້).<br>• ເອກະສານຮັບຮອງການກວດກາຄຸນນະພາບນ້ຳ. |

## 3. ດ້ານວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍ

| ຕົວຊີ້ວັດແລະລາຍການການປະເມີນຜົນ | | ຄຳອະທິບາຍຄຳສັບຕົວຊີ້ບອກ | ຫຼັກຖານ |
|---|---|---|---|
| ★ | | | |
| 3.1 ໂຮງຮຽນມີວິດຖ່າຍ, ບ່ອນທຳຄວາມສະອາດຮ່າງກາຍ,ບ່ອນລ້າງມືເປັນກຸ່ມທີ່ສະອາດ ແລະ ປອດໄພ. | 3.1.1 ມີວິດຖ່າຍ ແລະ ບ່ອນລ້າງມືເປັນກຸ່ມ.<br>3.1.2 ມີບ່ອນທຳຄວາມສະອາດຮ່າງກາຍ.<br>3.1.3 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດຮ່າງກາຍມີຄວາມສະອາດ.<br>3.1.4 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດ. | • ວິດຖ່າຍ ທີ່ສະອາດ ແລະ ປອດໄພ ໝາຍເຖິງ ວິດຖ່າຍຖືກຫຼັກສຸຂະອະນາໄມ, ບໍ່ມີຄາບເປື້ອນ, ຂີ້ເຫຍື້ອ ແລະ ບໍ່ມີກິ່ນເໝັນ.<br>• ບ່ອນທຳຄວາມສະອາດຮ່າງກາຍ ແລະ ບ່ອນລ້າງມືເປັນກຸ່ມທີ່ສະອາດ ແລະ ປອດໄພໝາຍເຖິງ ບ່ອນອາບນ້ຳ, ລ້າງມືທີ່ສະອາດ ບໍ່ມີຄາບເປື້ອນ, ຂີ້ເຫຍື້ອ, ກິ່ນເໝັນ, ນ້ຳຂັງ, ສິ່ງກີດຂວາງ ແລະ ບໍ່ມື່ນ. | • ສັງເກດວິດຖ່າຍ, ບ່ອນລ້າງມື ແລະ ບ່ອນທຳຄວາມສະອາດຮ່າງກາຍ ສະອາດທຸກບ່ອນ. |
| 3.2 ມີການປົກປັກຮັກສາ ແລະ ສ້ອມແປງວິດຖ່າຍ, ບ່ອນລ້າງມື ແລະ ບ່ອນທຳຄວາມສະອາດຮ່າງກາຍໃຫ້ໃຊ້ໄດ້ປົກກະຕິ. | 3.2.1 ຕາຕະລາງອະນາໄມປະຈຳວັນ.<br>3.2.2 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດຮ່າງກາຍໃຊ້ໄດ້ປົກກະຕິ. | • ການປົກປັກຮັກສາວິດຖ່າຍ, ບ່ອນທຳຄວາມສະອາດຮ່າງກາຍ ແລະ ບ່ອນລ້າງມື ໝາຍເຖິງ ການອະນາໄມໃຫ້ສະອາດ ແລະ ໃຊ້ໄດ້ເປັນປົກກະຕິ.<br>• ການສ້ອມແປງວິດຖ່າຍ, ບ່ອນທຳຄວາມສະອາດຮ່າງກາຍ ແລະ ບ່ອນລ້າງມື ໝາຍເຖິງ ການສ້ອມແປງ ຫຼື ປ່ຽນແທນໃນເວລາເປ່ເພເຊັ່ນ: ກ໋ອກນ້ຳຮົ່ວ, ທໍ່ນ້ຳຮົ່ວ/ແຕກ, ວິດຖ່າຍຕັນ/ເຕັມ ແລະ ອື່ນໆ. | • ສັງເກດຕາຕະລາງການຮັກສາອະນາໄມ.<br>• ສັງເກດວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດຮ່າງກາຍ.<br>• ສອບຖາມຜູ້ອຳນວຍການ ແລະ ຄູ. |
| ★★ | | | |
| 3.3 ມີວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍໄດ້ຮັບການປັບປຸງ ແລະ ເໝາະສົມກັບສ່ຳອາຍຸຂອງເດັກ ແລະ ໃຊ້ໄດ້ເປັນປົກກະຕິ. | 3.3.1 ຫ້ອງວິດ ແລະ ບ່ອນທຳຄວາມສະອາດຮ່າງກາຍເໝາະສົມ ກັບ ສ່ຳອາຍຸຂອງນັກຮຽນ ແລະ ປອດໄພ.<br>3.3.2 ຢູ່ບໍລິເວນໃກ້ວິດຖ່າຍມີບ່ອນລ້າງມືສ່ວນບຸກຄົນ ມີສະບູ ແລະ ນ້ຳ. | • ວິດຖ່າຍໄດ້ຮັບການປັບປຸງໝາຍເຖິງ: ວິດຖ່າຍເໝາະສົມກັບແຕ່ລະສ່ຳອາຍຸຂອງນັກຮຽນ ເຊັ່ນ: ຫ້ອງວິດສຳລັບນັກຮຽນ, ການຕິດຕັ້ງໂຖຍ່ຽວບໍ່ສູງເກີນໄປ, ມີບ່ອນລ້າງມື, ອ່າງນ້ຳລ້າງ ທີ່ປອດໄພສຳລັບນັກຮຽນ ແລະ ຖືກຫຼັກສຸຂະອະນາໄມ.<br>• ບ່ອນທຳຄວາມສະອາດຮ່າງກາຍໄດ້ຮັບການປັບປຸງ ໝາຍເຖິງ: ຫ້ອງອາບນ້ຳມີຝາແອ້ມ, ມີຫຼັງຄາ ແລະ ເໝາະສົມກັບສ່ຳອາຍຸຂອງນັກຮຽນ. | • ສັງເກດ ຫ້ອງວິດຖ່າຍ, ບ່ອນທຳຄວາມສະອາດຮ່າງກາຍ ແລະ ບ່ອນລ້າງມືສ່ວນບຸກຄົນ. |
| ★★★ | | | |
| 3.4 ໂຮງຮຽນຮັບປະກັນໃຫ້ມີຫ້ອງວິດຖ່າຍ, ຫ້ອງອາບນ້ຳເໝາະສົມກັບຈຳນວນນັກຮຽນ, ສະດວກສຳລັບເດັກພິການ ແລະ ມີບ່ອນຍ່ຽວສຳລັບນັກຮຽນຊາຍ ພ້ອມທັງນຳໃຊ້ເປັນປົກກະຕິ. | 3.4.1 ສະເລ່ຍຈຳນວນນັກຮຽນກັບຫ້ອງວິດຖ່າຍ ບໍ່ເກີນ 30 ຄົນຕໍ່ຫ້ອງວິດ.<br>3.4.2 ມີວິດຖ່າຍທີ່ນັກຮຽນພິການສາມາດນຳໃຊ້ໄດ້.<br>3.4.3 ມີໂຖ/ຮາງຍ່ຽວເໝາະສົມສຳລັບນັກຮຽນຊາຍ.<br>3.4.4 ມີບ່ອນທຳຄວາມສະອາດຮ່າງກາຍເປັນຫ້ອງສະເພາະແຍກຍິງ-ຊາຍ ຫຼື ໄດ້ຜັດປ່ຽນກັນອາບຕາມ ເພດ. | • ຫ້ອງວິດຖ່າຍທີ່ເໝາະສົມ ໝາຍເຖິງ ຈຳນວນຫ້ອງວິດຕໍ່ນັກຮຽນໂດຍສະເລ່ຍ 30 ຄົນ/1 ຫ້ອງວິດ.<br>• ວິດຖ່າຍ ແລະ ຫ້ອງອາບນ້ຳສຳລັບນັກຮຽນພິການຄວນມີ ທາງລໍ້ຄົນພິການ, ມີຮາວຈັບ, ມີຫ້ອງຊັກໂຄກ, ປ້າຍສັນຍາລັກຄົນພິການ; ກໍລະນີມີຫ້ອງນ້ຳແລ້ວ ຄວນປັບປຸງ ໃຫ້ນັກຮຽນພິການສາມາດເຂົ້າເຖິງໄດ້.<br>• ໂຖ/ຮາງຍ່ຽວສຳລັບນັກຮຽນຊາຍ ໝາຍເຖິງ ບ່ອນຍ່ຽວທີ່ຈັດສະເພາະນັກຮຽນຊາຍ ແລະ ມີສິ່ງກັ້ນບັງ.<br>• ບ່ອນທຳຄວາມສະອາດຮ່າງກາຍແຍກຍິງ-ຊາຍ. | • ຖາມຜູ້ອຳນວຍການ ແລະ ຄູ.<br>• ສັງເກດວິດຖ່າຍຂອງນັກຮຽນພິການ.<br>• ສັງເກດບ່ອນຍ່ຽວຂອງນັກຮຽນຊາຍ.<br>• ສັງເກດຫ້ອງອາບນ້ຳຂອງນັກຮຽນຍິງ-ຊາຍ. |



## 4. ດ້ານສະພາບແວດລ້ອມ

| ຕົວຊີ້ວັດແລະລາຍການການປະເມີນຜົນ | | ຄຳອະທິບາຍຄຳສັບຕົວຊີ້ບອກ | ຫຼັກຖານ |
|---|---|---|---|
| ★ | | | |
| **4.1 ໃນ ແລະ ນອກຫ້ອງຮຽນມີຄວາມສະອາດ ແລະ ປອດໄພ.** | 4.1.1 ໃນ ແລະ ນອກຫ້ອງຮຽນມີ ຄວາມສະອາດ ແລະ ປອດໄພ.<br>4.1.2 ນອກຫ້ອງຮຽນມີກະຕ່າໃສ່ ຂີ້ເຫຍື້ອ.<br>4.1.3 ມີຕາຕະລາງອະນາໄມໃນ ແລະ ນອກຫ້ອງຮຽນ. | • ໃນຫ້ອງຮຽນ ມີຄວາມສະອາດ ແລະ ປອດໄພ ໝາຍເຖິງ: ມີການອະນາໄມຫ້ອງຮຽນທຸກວັນ, ບໍ່ມີຂີ້ເຫຍື້ອ, ຂີ້ຝຸ່ນ, ບໍ່ມີໄຍແມງມຸມ. ຫ້ອງຮຽນມີຄວາມເປັນລະບຽບຮຽບຮ້ອຍ, ມີແສງສະຫວ່າງພຽງພໍ, ອາກາດປອດໂປ່ງດີ, ບໍ່ມີສິ່ງກີດຂວາງ, ບ່ອນມ້ຽນອຸປະກອນແໜ້ນໜາດີ, ເໝາະສົມກັບສໍາອາຍຸນັກຮຽນ ແລະ ລະບົບໄຟຟ້າໃນໂຮງຮຽນມີຄວາມປອດໄພ.<br>• ນອກຫ້ອງຮຽນມີຄວາມສະອາດ ແລະ ປອດໄພ ໝາຍເຖິງ:ບໍ່ມີຂີ້ເຫຍື້ອ, ຂີ້ຕົມ, ຂີ້ສັດ, ບໍ່ມີຫຍ້າຮົກເຮື້ອ, ເດີ່ນຮາບພຽງ, ບໍ່ມີສິ່ງກີດຂວາງ, ອຸປະກອນ, ເຄື່ອງຫຼິ້ນແໜ້ນໜາດີ ແລະ ມີຮົ້ວອ້ອມທີ່ແໜ້ນ. | • ສັງເກດ ເພດານ, ຝາຫ້ອງຮຽນ, ພື້ນຫ້ອງຮຽນ, ໂຕະ, ຕັ່ງ, ເຄື່ອງນອນ, ສາດ, ໄຟຟ້າ, ເຄື່ອງຫຼິ້ນໃນຫ້ອງ, ເຄື່ອງຫຼິ້ນກາງແຈ້ງ, ເດີ່ນ ແລະ ຮົ້ວໂຮງຮຽນ.<br>• ສັງເກດກະຕ່າຂີ້ເຫຍື້ອ.<br>• ມີຕາຕະລາງອະນາໄມໃນ ແລະ ນອກຫ້ອງຮຽນ. |
| ★★ | | | |
| **4.2 ຫ້ອງຄົວ ຫຼື ບ່ອນທີ່ເດັກກິນເຂົ້າທີ່ສະອາດ ແລະ ປອດໄພ, ມີບ່ອນລ້າງມື ແລະ ສະບູ.** | 4.2.1 ຫ້ອງຄົວ ຫຼື ບ່ອນກິນເຂົ້າ ມີຄວາມສະອາດ ແລະ ຄວາມເປັນລະບຽບ.<br>4.2.2 ຢູ່ໃກ້ຫ້ອງຄົວ ຫຼື ບ່ອນກິນເຂົ້າ ມີບ່ອນລ້າງມື ແລະ ສະບູ. | • ຫ້ອງຄົວ ຫຼື ບ່ອນນັກຮຽນກິນເຂົ້າທີ່ສະອາດໝາຍເຖິງ ການຈັດວາງເຄື່ອງໃຊ້ເປັນລະບຽບຮຽບຮ້ອຍ, ພື້ນ, ຝາ, ເພດານບໍ່ເປື້ອນເປິ, ອະນາໄມເຄື່ອງໃຊ້ກ່ອນ-ຫຼັງທຸກຄັ້ງ, ຈັດບ່ອນກິນເຂົ້າເໝາະສົມ ແລະ ປອດໄພ.<br>• ບໍລິເວນຫ້ອງຄົວ ຫຼື ບ່ອນກິນເຂົ້າ ມີບ່ອນລ້າງມື ແລະ ສະບູ. | • ສັງເກດຫ້ອງຄົວ, ບ່ອນທີ່ນັກຮຽນກິນເຂົ້າ, ບ່ອນລ້າງມື ແລະ ສະບູ.<br>• ສອບຖາມແມ່ຄົວ, ຜູ້ອໍານວຍການ, ຄູ ແລະນັກຮຽນ. |
| **4.3 ໂຮງຮຽນມີສະພາບແວດລ້ອມທີ່ຖືກຫຼັກສຸຂະອະນາໄມ.** | 4.3.1 ໂຮງຮຽນມີລະບົບລະບາຍນໍ້າເປື້ອນທີ່ໃຊ້ໄດ້.<br>4.3.2 ມີການກໍາຈັດແຫຼ່ງເພາະພັນຍຸງລາຍ.<br>4.3.3 ໂຮງຮຽນໄດ້ແຍກ ແລະ ກໍາຈັດຂີ້ເຫຍື້ອ.<br>4.3.4 ມີອຸປະກອນ ແລະ ສິ່ງອໍານວຍຄວາມສະດວກໃນການອະນາໄມໄດ້ນໍາໃຊ້ເປັນປົກກະຕິ. | • ສະພາບແວດລ້ອມທີ່ຖືກຫຼັກສຸຂະອະນາໄມ ໝາຍເຖິງ:ມີລະບົບລະບາຍນໍ້າເປື້ອນ, ທໍາລາຍແຫຼ່ງເພາະພັນຍຸງລາຍ ເຊັ່ນ: ກະໂປະ, ກະປ໋ອງ, ໂຖດອກໄມ້, ພາຊະນະໃສ່ນໍ້າມີຝາປິດ ຫຼື ມີການປ່ອຍປາກິນໜອນນໍ້າ.<br>• ສິ່ງອໍານວຍຄວາມສະດວກ ໃນການອະນາໄມໝາຍເຖິງ: ຟອຍປັດພື້ນ, ໄມ້ຖູພື້ນ, ຟອຍຖູຫ້ອງນໍ້າ, ຟອຍປັດໄຍແມງມຸມ, ອັນຊ້ອນຂີ້ເຫຍື້ອ ແລະ ອື່ນໆ. | • ສັງເກດ ລະບົບລະບາຍນໍ້າເປື້ອນຂອງວິດຖ່າຍ , ບ່ອນລ້າງມື, ບ່ອນອາບນໍ້າ, ຫ້ອງຄົວ ແລະ ບ່ອນອື່ນໆ.<br>• ສັງເກດໜອນນໍ້າໃນພາຊະນະໃສ່ນໍ້າ ,ໂຖດອກໄມ້ ແລະ ບ່ອນອື່ນໆ.<br>• ສັງເກດປ້າຍ ແລະ ກະຕ່າແຍກຂີ້ເຫຍື້ອ.<br>• ສອບຖາມ ຜູ້ອໍານວຍການ ແລະ ຄູ ກ່ຽວກັບອຸປະກອນໃນການອະນາໄມ. |
| ★★★ | | | |
| **4.4 ໂຮງຮຽນຮັບປະກັນໃຫ້ມີສະພາບແວດລ້ອມທີ່ສະອາດ ແລະ ປອດໄພ.** | 4.4.1 ມີການປະສານງານ ແລະ ຮ່ວມມືກັບຄະນະພັດທະນາການສຶກສາຂັ້ນບ້ານ.<br>4.4.2 ວຽກງານສະພາບແວດລ້ອມໄດ້ບັນຈຸໃນແຜນພັດທະນາໂຮງຮຽນ. | • ຮັບປະກັນໃຫ້ມີສະພາບແວດລ້ອມ ທີ່ສະອາດ ແລະ ປອດໄພ ໝາຍເຖິງ: ມີການປະສານ ສົມທົບ ແລະ ຮ່ວມມືກັບຄະນະພັດທະນາການສຶກສາຂັ້ນບ້ານ ໃນການບູລະນະ ແລະ ປົກປັກຮັກສາສະພາບແວດລ້ອມໃນໂຮງຮຽນ ເປັນປົກກະຕິ.<br>• ຜູ້ອໍານວຍການ ແລະ ຄະນະພັດທະນາການສຶກສາຂັ້ນບ້ານນໍາເອົາວຽກງານດັ່ງກ່າວເຂົ້າໃນແຜນພັດທະນາໂຮງຮຽນ ແລະ ຈັດຕັ້ງປະຕິບັດ, ຕິດຕາມ, ຖອດຖອນບົດຮຽນຮ່ວມກັນ. | • ເບິ່ງບົດບັນທຶກການປຶກສາຫາລືລະຫວ່າງໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ.<br>• ເບິ່ງບົດບັນທຶກລະຫວ່າງສ້າງກິດຈະກໍາ ແລະ ມອບໝາຍຄວາມຮັບຜິດຊອບ.<br>• ເບິ່ງແຜນພັດທະນາໂຮງຮຽນ ແລະ ບົດສະຫຼຸບຖອດຖອນບົດຮຽນ. |



>>

## 5. ດ້ານການອະນາໄມສ່ວນບຸກຄົນ

| ຕົວຊີ້ວັດແລະລາຍການການປະເມີນຜົນ | | ຄໍາອະທິບາຍຄໍາສັບຕົວຊີ້ບອກ | ຫຼັກຖານ |
|---|---|---|---|
| ★ | | | |
| **5.1 ໂຮງຮຽນ ໃຫ້ຄວາມຮູ້ ແລະ ເຝິກທັກສະໃນການຮັກສາອະນາໄມສ່ວນບຸກຄົນ ແກ່ນັກຮຽນ, ຄູ ແລະ ພໍ່ແມ່/ຜູ້ປົກຄອງ.** | 5.1.1 ຜູ້ອໍານວຍການໄດ້ເຜີຍແຜ່ການຮັກສາອະນາໄມສ່ວນບຸກຄົນໃຫ້ຄູ, ນັກຮຽນ ແລະ ພໍ່ແມ່/ຜູ້ປົກຄອງ.<br>5.1.2 ຄູປະຈໍາຫ້ອງໄດ້ກວດກາຄວາມສະອາດຂອງນັກຮຽນທຸກວັນ.<br>5.1.3 ຄູນໍາພານັກຮຽນທຸກຄົນໄດ້ລ້າງມືໃສ່ສະບູເປັນກຸ່ມທຸກວັນ.<br>5.1.4 ນັກຮຽນໄດ້ຮັບການອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາ.<br>5.1.5 ຜູ້ປຸງແຕ່ງອາຫານ ຫຼື ຜູ້ກະກຽມອາຫານ ລ້າງມືໃສ່ສະບູ ກ່ອນ-ຫຼັງປຸງແຕ່ງອາຫານທຸກຄັ້ງ. | • ອະນາໄມສ່ວນບຸກຄົນໝາຍເຖິງ: ອາບນໍ້າ, ສະຜົມ ແລະ ຫວີຜົມໃຫ້ເປັນລະບຽບຮຽບຮ້ອຍ, ການນຸ່ງຖືສະອາດ, ຕັດເລັບມື-ເລັບຕີນ, ລ້າງມື, ຖູແຂ້ວ, ໃສ່ເກີບເວລາຍ່າງດິນ. | • ມີບົດບັນທຶກກອງປະຊຸມ.<br>• ສັງເກດຄວາມສະອາດຂອງນັກຮຽນ (ຜົມ, ຫູ, ຕາ, ດັງ, ແຂ້ວ, ເລັບມື-ຕີນ, ຜິວໜັງ, ເຄື່ອງນຸ່ງ ແລະ ອື່ນໆ).<br>• ສອບຖາມຜູ້ອໍານວຍການ, ຄູພໍ່ແມ່/ຜູ້ປົກຄອງ.<br>• ສັງເກດຜ້າແພເຊັດຕົວຂອງນັກຮຽນ.<br>• ສັງເກດອ່າງລ້າງມືວ່າໄດ້ຖືກນໍາໃຊ້.<br>• ສັງເກດຄວາມສະອາດຜູ້ແຕ່ງຫຼືຜູ້ກະກຽມອາຫານ. |
| ★★ | | | |
| **5.2 ໂຮງຮຽນ ສົ່ງເສີມການຮັກສາອະນາໄມສ່ວນບຸກຄົນ.** | 5.2.1 ນັກຮຽນທຸກຄົນລ້າງມືໃສ່ສະບູ ກ່ອນ- ຫຼັງກິນອາຫານ ແລະ ຫຼັງຈາກຈັບບາຍສິ່ງເປື້ອນເປິທຸກຄັ້ງ.<br>5.2.2 ນັກຮຽນທຸກຄົນໄດ້ລ້າງມື ແລະ ຖູແຂ້ວເປັນກຸ່ມທຸກວັນ.<br>5.2.3 ນັກຮຽນທຸກຄົນໄດ້ຮັບການອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາ. | • ການສົ່ງເສີມການຮັກສາອະນາໄມສ່ວນບຸກຄົນໝາຍເຖິງ: ຄູ ຫຼື ພໍ່ແມ່/ຜູ້ປົກຄອງຝຶກໃຫ້ນັກຮຽນຮັກສາອະນາໄມສ່ວນບຸກຄົນຈົນກາຍເປັນຄວາມຊິນເຄີຍ. | • ສັງເກດການປະຕິບັດກິດຈະກໍາລ້າງມືຖູແຂ້ວເປັນກຸ່ມ.<br>• ສອບຖາມຄູ ຫຼື ສັງເກດຕົວຈິງ. |
| ★★★ | | | |
| **5.3 ໂຮງຮຽນຮັບປະກັນໃຫ້ນັກຮຽນມີພຶດຕິກໍາທີ່ດີໃນການຮັກສາອະນາໄມສ່ວນບຸກຄົນ.** | 5.3.1 ນັກຮຽນອະນຸບານ 3 ທຸກຄົນໄດ້ລ້າງມືໃສ່ສະບູດ້ວຍຕົນເອງຫຼັງໃຊ້ວິດຖ່າຍ, ກ່ອນ-ຫຼັງກິນອາຫານ ແລະ ຫຼັງຈາກການຫຼິ້ນ.<br>5.3.2 ນັກຮຽນອະນຸບານ 3 ທຸກຄົນໄດ້ອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາດ້ວຍຕົນເອງ.<br>5.3.3 ນັກຮຽນທຸກຄົນມີຄວາມສະອາດທາງດ້ານຮ່າງກາຍ ແລະ ເຄື່ອງນຸ່ງ. | • ນັກຮຽນມີພຶດຕິກໍາທີ່ດີໃນການຮັກສາອະນາໄມສ່ວນບຸກຄົນ ເຊັ່ນ: ການອະນາໄມຮ່າງກາຍ, ນຸ່ງຖືສະອາດ, ລ້າງມືໃສ່ສະບູ, ຖູແຂ້ວ, ຕັດເລັບມື-ເລັບຕີນ ແລະ ໃສ່ເກີບ. | • ສອບຖາມຄູ, ນັກຮຽນ ຫຼື ຜູ້ອໍານວຍການ.<br>• ສັງເກດ ນັກຮຽນຕົວຈິງ. |



**ດ້ານສະພາບແວດລ້ອມ**

- ຜົມ ແລະເຄື່ອງນຸ່ງສະອາດ
- ຕັດນິ້ວມື ແລະເລັບຕີນ
- ໃສ່ເກີບ
- ໃສ່ຜ້າປິດປາກ
- ຖູແຂ້ວ
- ທໍາຄວາມສະອາດຮ່າງກາຍ
- ສຸຂະອະນາໄມປະຈໍາເດືອນ

## 6. ດ້ານການກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ

| ຕົວຊີ້ວັດແລະລາຍການການປະເມີນຜົນ | | ຄໍາອະທິບາຍຄໍາສັບຕົວຊີ້ບອກ | ຫຼັກຖານ |
|---|---|---|---|
| ★ | | | |
| **6.1 50–70% ຂອງຈໍານວນ ນັກຮຽນໄດ້ກິນຢາຂ້າ ແມ່ທ້ອງ ແລະ ວິຕາມິນເອ.** | 6.1.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແລະ້ງໃຫ້ໄດ້ 50–70% .<br><br>6.1.1 ໂຮງຮຽນມີຖານຂໍ້ມູນຂອງ ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ. | • ໂຮງຮຽນ ປະສານສົມທົບກັບພໍ່ແມ່/ຜູ້ປົກຄອງ ແລະ ໂຮງໝໍນ້ອຍ/ສາທາລະນາສຸກເມືອງ ເພື່ອເກັບກໍາຂໍ້ມູນນັກຮຽນທີ່ໄດ້ກິນຢາ ແລະ ບໍ່ທັນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ.<br>• ມີການບັນທຶກຂໍ້ມູນທຸກຄັ້ງທີ່ພະນັກງານ ສາທາລະນາສຸກລົງມາຢາຍຢາຂ້າແມ່ທ້ອງ ແລະ ວິຕາມິນເອ.<br>• ນັກຮຽນ ໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ ໄດ້ເຖິງ 50-70% ຂອງຈໍານວນນັກຮຽນທັງໝົດ. | • ບັນຊີລາຍຊື່ນັກຮຽນທີ່ໄດ້ກິນຢາ ແລະ ບໍ່ໄດ້ກິນຢາ. |
| ★★ | | | |
| **6.2 71–80% ຂອງຈໍານວນ ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ.** | 6.2.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 71–80%. | • ມີການບັນທຶກຂໍ້ມູນທຸກຄັ້ງທີ່ພະນັກງານສາທາລະນາສຸກລົງມາຢາຍຢາຂ້າແມ່ທ້ອງ ແລະ ວິຕາມິນເອ.<br>• ນັກຮຽນ ໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ ໄດ້ເຖິງ 71-80% ຂອງຈໍານວນນັກຮຽນທັງໝົດ. | • ບັນຊີລາຍຊື່ນັກຮຽນທີ່ໄດ້ກິນຢາ ແລະ ບໍ່ໄດ້ກິນຢາ. |
| ★★★ | | | |
| **6.3 81% ຂຶ້ນໄປ ຂອງຈໍານວນ ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ.** | 6.3.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 81% ຂຶ້ນໄປ. | • ມີການບັນທຶກຂໍ້ມູນທຸກຄັ້ງທີ່ພະນັກງານສາທາລະນາສຸກລົງມາຢາຍຢາຂ້າແມ່ທ້ອງ ແລະ ວິຕາມິນເອ.<br>• ນັກຮຽນ ໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ ໄດ້ເຖິງ 81% ຂຶ້ນໄປ ຂອງຈໍານວນນັກຮຽນທັງໝົດ. | • ບັນຊີລາຍຊື່ນັກຮຽນທີ່ໄດ້ກິນຢາ ແລະ ບໍ່ໄດ້ກິນຢາ. |





# ໃບປະເມີນມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນປະຖົມໂດຍນຳໃຊ້ ຮູບແບບ 3 ດາວ

ຊື່ໂຮງຮຽນ: ____________________

ເມືອງ: ____________________

ແຂວງ: ____________________

ລະຫັດໂຮງຮຽນ: __________ ລະຫັດເມືອງ: __________ ລະຫັດແຂວງ: __________

ຊື່ຜູ້ອຳນວຍການ: ____________________ ຍິງ ☐ ຊາຍ ☐

ເບີໂທຕິດຕໍ່: ____________________

ຊື່ຜູ້ປະເມີນ: ____________________ ປະເມີນຜົນ ຄັ້ງວັນທີ: __________

**ຄຳຊີ້ແຈງ**

ໃຫ້ທ່ານອ່ານລາຍລະອຽດໃນການປະເມີນແຕ່ລະຂໍ້ ແລ້ວໝາຍເຄື່ອງໝາຍຖືກ (✓) ໃສ່ຫ້ອງ ແມ່ນ - ບໍ່ແມ່ນ ຫຼື ຫ້ອງ ບໍ່ໄດ້ປະເມີນ ທີ່ຢູ່ເບື້ອງຂວາມືຕາມສະພາບຄວາມເປັນຈິງຂອງໂຮງຮຽນ;

**ກະລຸນາໃສ່ຕົວເລກ: ແມ່ນ = 1 ບໍ່ແມ່ນ = 0 ບໍ່ໄດ້ປະເມີນ = 2**

(✓) ○ ○ #.......

| ລະດັບດາວ | ຕົວຊີ້ບອກ | ລາຍການປະເມີນ | ແມ່ນ | ບໍ່ແມ່ນ | ບໍ່ໄດ້ປະເມີນ | ລະຫັດຄຳຕອບ |
|---|---|---|---|---|---|---|
| | | **1. ດ້ານນ້ຳໃຊ້** | | | | |
| ★★★ | 1.1 | 1.1.1 ໂຮງຮຽນມີນ້ຳໃຊ້ ແລະ ໄດ້ນຳໃຊ້ພຽງພໍສຳລັບທຸກກິດຈະກຳ. | ○ | ○ | ✕ | ..... |
| | 1.2 | 1.2.1 ບ່ອນຊຶມໃຊ້ນ້ຳມີຄວາມສະດວກ. | ○ | ○ | ✕ | ..... |
| | 1.3 | 1.3.1 ນ້ຳທີ່ເອົາມານຳໃຊ້ໃນໂຮງຮຽນແມ່ນໄດ້ຈາກແຫຼ່ງນ້ຳທີ່ໄດ້ຮັບການປັບປຸງແລ້ວ. | ○ | ○ | ✕ | ..... |
| | | 1.3.2 ໂຮງຮຽນມີນ້ຳໃຊ້ ພຽງພໍສຳລັບທຸກກິດຈະກຳ ຕະຫຼອດສົກຮຽນ. | ○ | ○ | ✕ | ..... |
| | 1.4 | 1.4.1 ລະບົບນ້ຳໃຊ້ງານໄດ້ປົກກະຕິ. | ○ | ○ | ✕ | ..... |
| | | 1.4.2 ພາຊະນະໃສ່ນ້ຳສະອາດ. | ○ | ○ | ✕ | ..... |
| | 1.5 | 1.5.1 ແຫຼ່ງນ້ຳໃນໂຮງຮຽນໃຊ້ໄດ້ພຽງພໍຕະຫຼອດປີ (ປະມານ10-25 ລິດ/ຄົນ/ມື້). | ○ | ○ | ✕ | ..... |
| | | 1.5.2 ແຫຼ່ງນ້ຳໃນໂຮງຮຽນ ເປັນແຫຼ່ງນ້ຳທີ່ໄດ້ຮັບການປັບປຸງແລ້ວ. | ○ | ○ | ✕ | ..... |
| | | 1.5.3 ນ້ຳໃຊ້ສະອາດ. | ○ | ○ | ✕ | ..... |
| | 1.6 | 1.6.1 ນັກຮຽນປົກກະຕິສາມາດເຂົ້າເຖິງບ່ອນຊຶມໃຊ້ນ້ຳໄດ້ສະດວກ ແລະ ປອດໄພ. | ○ | ○ | ✕ | ..... |
| | | 1.6.2 ນັກຮຽນພິການສາມາດເຂົ້າເຖິງບ່ອນຊຶມໃຊ້ນ້ຳໄດ້ຢ່າງສະດວກ ແລະ ປອດໄພ. | ○ | ○ | ✕ | ..... |
| | | **2. ດ້ານນ້ຳດື່ມສະອາດປອດໄພ** | | | | |
| ★★★ | 2.1 | 2.1.1 ກຮຽນທຸກຄົນໄດ້ດື່ມນ້ຳຢູ່ໃນໂຮງຮຽນ. | ○ | ○ | ✕ | ..... |
| | 2.2 | 2.2.1 ພາຊະນະໃສ່ນ້ຳດື່ມ ຫຼື ຈອກຂອງນັກຮຽນສະອາດ. | ○ | ○ | ✕ | ..... |
| | | 2.2.2 ມີຜູ້ຕິດຕາມຄວາມສະອາດຂອງພາຊະນະໃສ່ນ້ຳດື່ມ. | ○ | ○ | ✕ | ..... |
| | 2.3 | 2.3.1 ໂຮງຮຽນສາມາດສະໜອງນ້ຳດື່ມທີ່ສະອາດ ແລະ ປອດໄພໃຫ້ນັກຮຽນໄດ້ດື່ມ ຢ່າງໜ້ອຍ 0.5 ລິດ/ຄົນ/ມື້. | ○ | ○ | ✕ | ..... |
| | | 2.3.2 ພໍ່ແມ່/ຜູ້ປົກຄອງ ຫຼື ໂຮງຮຽນໄດ້ເອົານ້ຳດື່ມທີ່ສະອາດ ແລະ ປອດໄພ ມາໃຫ້ນັກຮຽນດື່ມແຕ່ລະມື້. | ○ | ○ | ✕ | ..... |
| | 2.4 | 2.4.1. ບ່ອນວາງນ້ຳດື່ມເໝາະສົມກັບສ່ຳອາຍຸ, ປອດໄພ ແລະ ສາມາດເອົານ້ຳດື່ມໄດ້. | ○ | ○ | ✕ | ..... |
| | | 2.4.2. ພາຊະນະໃສ່ນ້ຳດື່ມສະອາດ ແລະ ພຽງພໍສຳລັບທຸກຄົນ. | ○ | ○ | ✕ | ..... |
| | 2.5 | 2.5.1 ໂຮງຮຽນສະໜອງນ້ຳດື່ມສະອາດ, ປອດໄພ ແລະ ພຽງພໍ 1 ລິດ/ຄົນ/ມື້. | ○ | ○ | ✕ | ..... |
| | | 2.5.2 ໄດ້ກວດຄຸນນະພາບນ້ຳດື່ມຢ່າງໜ້ອຍປີລະ 1 ຄັ້ງ. | ○ | ○ | ✕ | ..... |



| ລະດັບດາວ | ຕົວຊີ້ບອກ | ລາຍການປະເມີນ | ແມ່ນ | ບໍ່ແມ່ນ | ບໍ່ໄດ້ປະເມີນ | ລະຫັດຄຳຕອບ |
|---|---|---|---|---|---|---|
| | | **3. ວິດຖ່າຍ ແລະ ບ່ອນທຳຄວາມສະອາດຮ່າງກາຍ** | | | | |
| ★★★ | 3.1 | 3.1.1 ມີວິດຖ່າຍ ແລະ ບ່ອນລ້າງມືເປັນກຸ່ມ. | ○ | ○ | ✕ | ..... |
| | | 3.1.2 ມີບ່ອນທຳຄວາມສະອາດຮ່າງກາຍ. | ○ | ○ | ✕ | ..... |
| | | 3.1.3 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດຮ່າງກາຍມີຄວາມສະອາດ. | ○ | ○ | ✕ | ..... |
| | | 3.1.4 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດ. | ○ | ○ | ✕ | ..... |
| | 3.2 | 3.2.1 ຕາຕະລາງອະນາໄມປະຈຳວັນ. | ○ | ○ | ✕ | ..... |
| | | 3.2.2 ວິດຖ່າຍ, ບ່ອນລ້າງມືເປັນກຸ່ມ ແລະ ບ່ອນທຳຄວາມສະອາດຮ່າງກາຍໃຊ້ໄດ້ປົກກະຕິ. | ○ | ○ | ✕ | ..... |
| | 3.3 | 3.3.1 ຫ້ອວິດ ແລະ ບ່ອນທຳຄວາມສະອາດຮ່າງກາຍ ເໝາະສົມ ກັບ ສ່ຳອາຍຸຂອງນັກຮຽນ ແລະ ປອດໄພ. | ○ | ○ | ✕ | ..... |
| | | 3.3.2 ຢູ່ບໍລິເວນໃກ້ວິດຖ່າຍມີບ່ອນລ້າງມືສ່ວນບຸກຄົນ ມີສະບູ ແລະ ນ້ຳ. | ○ | ○ | ✕ | ..... |
| | 3.4 | 3.4.1 ສະເລ່ຍຈຳນວນນັກຮຽນ ກັບຫ້ອວິດຖ່າຍ ບໍ່ເກີນ 30 ຄົນຕໍ່ຫ້ອວິດ. | ○ | ○ | ✕ | ..... |
| | | 3.4.2 ມີວິດຖ່າຍທີ່ນັກຮຽນພິການສາມາດນຳໃຊ້ໄດ້. | ○ | ○ | ✕ | ..... |
| | | 3.4.3 ມີໂຖ/ຮາງຍ່ຽວເໝາະສົມສຳລັບນັກຮຽນຊາຍ. | ○ | ○ | ✕ | ..... |
| | | 3.4.4 ມີບ່ອນທຳຄວາມສະອາດຮ່າງກາຍເປັນຫ້ອງສະເພາະ ແຍກຍິງ-ຊາຍ ຫຼື ໄດ້ຜັດປ່ຽນກັນອາບຕາມ ເພດ. | ○ | ○ | ✕ | ..... |
| | | **4. ດ້ານສະພາບແວດລ້ອມ** | | | | |
| ★★★ | 4.1 | 4.1.1 ໃນ ແລະ ນອກຫ້ອງຮຽນມີຄວາມສະອາດ ແລະ ປອດໄພ. | ○ | ○ | ✕ | ..... |
| | | 4.1.2 ນອກຫ້ອງຮຽນມີກະຕ່າໃສ່ຂີ້ເຫຍື້ອ. | ○ | ○ | ✕ | ..... |
| | | 4.1.3 ມີຕາຕະລາງອະນາໄມໃນ ແລະ ນອກຫ້ອງຮຽນ. | ○ | ○ | ✕ | ..... |
| | 4.2 | 4.2.1 ຫ້ອງຄົວ ຫຼື ບ່ອນກິນເຂົ້າ ມີຄວາມສະອາດ ແລະ ຄວາມເປັນລະບຽບ. | ○ | ○ | ○ | ..... |
| | | 4.2.2 ຢູ່ໃກ້ຫ້ອງຄົວ ຫຼື ບ່ອນກິນເຂົ້າ ມີບ່ອນລ້າງມື ແລະ ສະບູ. | ○ | ○ | ○ | ..... |
| | 4.3 | 4.3.1 ໂຮງຮຽນມີລະບົບລະບາຍນ້ຳເປື້ອນທີ່ໃຊ້ໄດ້. | ○ | ○ | ✕ | ..... |
| | | 4.3.2 ມີການກຳຈັດແຫຼ່ງເພາະພັນຍຸງລາຍ. | ○ | ○ | ✕ | ..... |
| | | 4.3.3 ໂຮງຮຽນໄດ້ແຍກ ແລະ ກຳຈັດຂີ້ເຫຍື້ອ. | ○ | ○ | ✕ | ..... |
| | | 4.3.4 ມີອຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃນການອະນາໄມໄດ້ນຳໃຊ້ເປັນປົກກະຕິ. | ○ | ○ | ✕ | ..... |
| | 4.4 | 4.4.1 ມີການປະສານງານ ແລະ ຮ່ວມມືກັບຄະນະພັດທະນາການສຶກສາຂັ້ນບ້ານ. | ○ | ○ | ✕ | ..... |
| | | 4.4.2 ວຽກງານສະພາບແວດລ້ອມໄດ້ບັນຈຸໃນແຜນພັດທະນາໂຮງຮຽນ. | ○ | ○ | ✕ | ..... |
| | | **5. ດ້ານການອະນາໄມສ່ວນບຸກຄົນ** | | | | |
| ★★★ | 5.1 | 5.1.1 ຜູ້ອຳນວຍການໄດ້ເຜີຍແຜ່ການຮັກສາອະນາໄມສ່ວນບຸກຄົນໃຫ້ຄູ, ນັກຮຽນ ແລະ ພໍ່ແມ່/ຜູ້ປົກຄອງ. | ○ | ○ | ✕ | ..... |
| | | 5.1.2 ຄູປະຈຳຫ້ອງໄດ້ກວດກາຄວາມສະອາດຂອງນັກຮຽນທຸກວັນ. | ○ | ○ | ✕ | ..... |
| | | 5.1.3 ຄູນຳພານັກຮຽນທຸກຄົນໄດ້ລ້າງມືໃສ່ສະບູເປັນກຸ່ມທຸກວັນ. | ○ | ○ | ✕ | ..... |
| | | 5.1.4 ນັກຮຽນໄດ້ຮັບການອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາ. | ○ | ○ | ✕ | ..... |
| | | 5.1.5 ຜູ້ປຸງແຕ່ງອາຫານ ຫຼື ຜູ້ກະກຽມອາຫານ ລ້າງມືໃສ່ສະບູ ກ່ອນ-ຫຼັງປຸງແຕ່ງອາຫານທຸກຄັ້ງ | ○ | ○ | ✕ | ..... |
| | 5.2 | 5.2.1 ນັກຮຽນທຸກຄົນລ້າງມືໃສ່ສະບູກ່ອນ-ຫຼັງກິນອາຫານ ແລະ ຫຼັງຈາກຈັບບາຍສິ່ງເປື້ອນເປິທຸກຄັ້ງ. | ○ | ○ | ✕ | ..... |
| | | 5.2.2 ນັກຮຽນທຸກຄົນໄດ້ລ້າງມື ແລະ ຖູແຂ້ວເປັນກຸ່ມທຸກວັນ. | ○ | ○ | ✕ | ..... |
| | | 5.2.3 ນັກຮຽນທຸກຄົນໄດ້ຮັບການອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາ. | ○ | ○ | ✕ | ..... |
| | 5.3 | 5.3.1 ນັກຮຽນອະນຸບານ 3 ທຸກຄົນ ໄດ້ລ້າງມືໃສ່ສະບູດ້ວຍຕົນເອງ ຫຼັງໃຊ້ວິດຖ່າຍ, ກ່ອນ-ຫຼັງກິນ ອາຫານ ແລະ ຫຼັງຈາກການຫຼິ້ນ. | ○ | ○ | ✕ | ..... |
| | | 5.3.2 ນັກຮຽນອະນຸບານ 3 ທຸກຄົນ ໄດ້ອະນາໄມຮ່າງກາຍເວລາຖ່າຍໜັກ ຫຼື ຖ່າຍເບົາດ້ວຍຕົນເອງ. | ○ | ○ | ✕ | ..... |
| | | 5.3.3 ນັກຮຽນທຸກຄົນມີຄວາມສະອາດທາງດ້ານຮ່າງກາຍ ແລະ ເຄື່ອງນຸ່ງ. | ○ | ○ | ✕ | ..... |
| | | **6. ດ້ານການກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ** | | | | |
| ★★★ | 6.1 | 6.1.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 50–70%. | ○ | ○ | ✕ | ..... |
| | | 6.1.2 ໂຮງຮຽນມີຖານຂໍ້ມູນຂອງນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ. | ○ | ○ | ✕ | ..... |
| | 6.2 | 6.2.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 71–80%. | ○ | ○ | ✕ | ..... |
| | 6.3 | 6.3.1 ນັກຮຽນໄດ້ກິນຢາຂ້າແມ່ທ້ອງ ແລະ ວິຕາມິນເອ 1 ຫຼື 2 ຄັ້ງ/ປີ ໃນແຕ່ລະຄັ້ງໃຫ້ໄດ້ 81% ຂຶ້ນໄປ. | ○ | ○ | ✕ | ..... |

# ການຕິດຕາມ, ລາຍງານ, ຈັດອັນດັບ ແລະ ຍ້ອງຍໍ





## ການຕິດຕາມ ແລະ ລາຍງານ

ຫຼັງຈາກໂຮງຮຽນໄດ້ປະເມີນ ສະພາບວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນຂອງຕົນແລ້ວ ຮຽກຮ້ອງໃຫ້ ມີການຕິດຕາມຢ່າງໃກ້ຊິດ ເພື່ອໃຫ້ໂຮງຮຽນຮັກສາສິ່ງທີ ປະຕິບັດໄດ້ດີ ແລະ ເອົາໃຈໃສ່ປັບປຸງຂໍ້ຄົງຄ້າງ ເພື່ອໃຫ້ບັນລຸຕາມມາດຕະຖານທີ່ວາງໄວ້

**ແຕ່ລະຂັ້ນຕ້ອງປະຕິບັດດັ່ງລຸ່ມນີ້:**



### ຂັ້ນໂຮງຮຽນ

ຜູ້ອຳນວຍການ ແລະ ຄູສອນ ຕິດຕາມການຈັດຕັ້ງປະຕິບັດ ເປັນປົກກະຕິ ແລະ ຕໍ່ເນື່ອງທຸກວັນ ເພື່ອຮັບປະກັນວ່າ ສິ່ງອຳນວຍຄວາມສະດວກດ້ານນ້ຳ ແລະ ສຸຂະອະນາໄມມີ ຄວາມສະອາດ, ປອດໄພ ແລະ ໃຊ້ງານໄດ້ປົກກະຕິ.

ຄູສອນ ຕິດຕາມການປ່ຽນແປງພຶດຕິກຳຂອງນັກຮຽນເຊັ່ນ: ລ້າງມືໃສ່ສະບູທຸກຄັ້ງ, ຖ່າຍໃສ່ວິດທຸກຄັ້ງ ແລະ ຖິ້ມຂີ້ເຫຍື້ອໃສ່ບ່ອນທີ່ກຳນົດໄວ້.

ເອົາຜົນການຈັດຕັ້ງປະຕິບັດວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ ເຂົ້າໃນບົດລາຍງານຂອງໂຮງຮຽນ.



### ຂັ້ນເມືອງ/ນະຄອນ

ສຶກສາຜົນການປະເມີນ ຂອງໂຮງຮຽນທີ່ຈະລົງຕິດຕາມຊຸກຍູ້.

ຕິດຕາມ, ຊຸກຍູ້ ຊ່ວຍເຫຼືອຜູ້ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອສົ່ງເສີມໃຫ້ ໂຮງຮຽນຮັກສາ ແລະ ເສີມຂະຫຍາຍສິ່ງທີປະຕິບັດໄດ້ດີ ພ້ອມທັງເອົາໃຈໃສ່ປັບປຸງຂໍ້ຄົງຄ້າງ.

ການລົງຕິດຕາມວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນໃຫ້ຄຽງຄູ່ກັບວຽກວິຊາການຂອງຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ.

ເອົາຜົນການຈັດຕັ້ງປະຕິບັດວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ ເຂົ້າໃນບົດລາຍງານຂອງຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ.



**ຂັ້ນແຂວງ/ນະຄອນຫຼວງ**

- ສຶກສາຜົນການປະເມີນໃນຖານຂໍ້ມູນວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນຂອງແຂວງ/ນະຄອນຫຼວງ.
- ຕິດຕາມ, ຊຸກຍູ້ ຊ່ວຍເຫຼືອຂັ້ນເມືອງ ແລະ ລົງສັງເກດການຈັດຕັ້ງປະຕິບັດຕົວຈິງໃນໂຮງຮຽນບາງແຫ່ງ.
- ລົງຕິດຕາມວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນຄຽງຄູ່ກັບວຽກວິຊາການຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ.
- ເອົາຜົນການຈັດຕັ້ງປະຕິບັດວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ເຂົ້າໃນບົດລາຍງານຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ.



**ຂັ້ນສູນກາງ**

- ສຶກສາຜົນການປະເມີນໃນຖານຂໍ້ມູນວຽກງງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນຂອງກົມການສຶກສາກ່ອນໄວ ຮຽນ.
- ຕິດຕາມ, ຊຸກຍູ້ ຊ່ວຍເຫຼືອແຕ່ລະຂັ້ນ ແລະ ລົງສັງເກດການຈັດຕັ້ງປະຕິບັດຕົວຈິງໃນໂຮງຮຽນບາງແຫ່ງ;
- ລົງຕິດຕາມວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນຄຽງຄູ່ກັບວຽກວິຊາການຂອງກົມ.
- ເອົາຜົນການຈັດຕັ້ງປະຕິບັດວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ ເຂົ້າໃນບົດລາຍງານປະຈໍາປີຂອງກົມ;
- ລາຍງານຜົນການຈັດຕັ້ງປະຕິບັດໃຫ້ລັດຖະມົນຕີຮັບຊາບ.



# ການຈັດລໍາດັບ ແລະ ການຍ້ອງຍໍ

ພາຍຫຼັງທີ່ໂຮງຮຽນດໍາເນີນການປະເມີນຕົນເອງໂດຍນໍາໃຊ້ເຄື່ອງມືປະເມີນຕົວຊີ້ບອກຂອງວຽກງານນໍ້າ ແລ ສຸຂະອະນາໄມໃນຮງຮຽນສໍາເລັດ ແລະ ເຫັນໄດ້ຈຸດທີ່ເຮັດໄດ້ດີ ຈຸດທີ່ຍັງຄົງຄ້າງ ໂດຍທຽບໃສ່ມາດຕະຖານ ການຈັດອັນດັບຕາມ 3 ລະດັບຄື: 1 ດາວ, 2 ດາວ ແລະ 3 ດາວ ເຊິ່ງແຕ່ລະດາວມີເງື່ອນໄຂດັ່ງລຸ່ມນີ້.

ການຍ້ອງຍໍແມ່ນ ການສົ່ງເສີມ ແລະ ໃຫ້ກໍາລັງໃຈໂຮງຮຽນທີ່ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ. ເງື່ອນໄຂໂຮງຮຽນທີ່ຈະໄດ້ຮັບການຍ້ອງຍໍ ມີດັ່ງນີ້.

| ການຈັດລໍາດັບ | ການຍ້ອງຍໍ |
| --- | --- |
| **ໂຮງຮຽນ 3 ດາວ + 3**<br>ບັນລຸໄດ້ທຸກລາຍການປະເມີນຂອງທຸກຕົວຊີ້ບອກໃນ 6 ດ້ານຂອງ:<br>**1 ດາວ, 2 ດາວ ແລະ 3 ດາວ***<br>**3 ປີຢ່າງຕໍ່ເນື່ອງ** | ກົມການສຶກສາກ່ອນໄວຮຽນເປັນຜູ້ຍ້ອງຍໍ |
| **ໂຮງຮຽນ 3 ດາວ**<br>ບັນລຸໄດ້ທຸກລາຍການປະເມີນຂອງທຸກຕົວຊີ້ບອກໃນ 6 ດ້ານຂອງ:<br>**1 ດາວ, 2 ດາວ ແລະ 3 ດາວ** | ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ເປັນຜູ້ຍ້ອງຍໍ |
| **ໂຮງຮຽນ 2 ດາວ**<br>ບັນລຸໄດ້ທຸກລາຍການປະເມີນຂອງທຸກຕົວຊີ້ບອກໃນ 6 ດ້ານຂອງ:<br>**1 ດາວ ແລະ 2 ດາວ*** | ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ເປັນຜູ້ຍ້ອງຍໍ |
| **ໂຮງຮຽນ 1 ດາວ**<br>ບັນລຸໄດ້ທຸກລາຍການປະເມີນຂອງທຸກຕົວຊີ້ບອກໃນ 6 ດ້ານຂອງ:<br>**1 ດາວ*** | |
| **ໂຮງຮຽນບໍ່ມີດາວ**<br>ໂຮງຮຽນທີ່ບໍ່ມີດາວແມ່ນໂຮງຮຽນທີ່ບໍ່ໄດ້ຕອບສະໜອງ ທັງໝົດທຸກລາຍການປະເມີນຂອງຕົວຊີ້ບອກໃນ 6 ດ້ານຂອງ 1 ດາວ | |

* ຍົກເວັ້ນ ລາຍການທີ່ບໍ່ໄດ້ປະເມີນ

ການປະເມີນຕາມຮູບແບບ 3 ດາວ ເພື່ອສົ່ງເສີມໃຫ້ໂຮງຮຽນມີການພັດທະນາແບບຍືນຍົງ ແຕ່ບໍ່ແມ່ນໃຫ້ໄດ້ຮັບການຍ້ອງຍໍພຽງຢ່າງດຽວ.

# ຂໍ້ແນະນຳໃນການເຜີຍແຜ່
# ການສັງລວມ ແລະ ວິເຄາະຂໍ້ມູນ





## ຂໍ້ແນະນຳໃນການເຜີຍແຜ່

**ການເຜີຍແຜ່ເພື່ອເຮັດໃຫ້ຫຼາຍໂຮງຮຽນໄດ້ ປະເມີນຕົນເອງ ແລະ ປັບປຸງວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນສາມາດປະຕິບັດໄດ້ ຫຼາຍວິທີ:**

### ວິທີການທຳອິດ

ວິທີ ທີໜຶ່ງ ເລີ່ມທົດລອງຢູ່ໂຮງຮຽນໃດໜຶ່ງ ແລ້ວໃຫ້ໂຮງຮຽນອື່ນມາຖອດຖອນບົດຮຽນ ແລະ ນຳໄປຈັດຕັ້ງ ປະຕິບັດ.

### ວິທີທີສອງ

ວິທີ ທີສອງ ເຜີຍແຜ່ໃຫ້ໂຮງຮຽນປະທານກຸ່ມ ໃຫ້ປະຕິບັດໃນໂຮງຮຽນຂອງຕົນ ແລະ ໃຫ້ໂຮງຮຽນອື່ນມາຖອດ ຖອນບົດຮຽນ ເພື່ອນຳໄປຈັດຕັ້ງປະຕິບັດ.

### ວິທີທີສາມ

ວິທີ ທີສາມ ກໍລະນີມີງົບປະມານພຽງພໍສາມາດຈັດເຝິກອົບຮົມໃຫ້ ຫຼາຍໂຮງຮຽນພ້ອມກັນ.

ນອກຈາກນີ້, ຍັງສາມາດສອດແຊກການເຜີຍ ແຜ່ເຂົ້າໃນກອງປະຊຸມວິຊາການຕ່າງໆ.

**ການເຜີຍແຜ່ລວມມີພາກທິດສະດີ ແລະ ພາກປະຕິບັດຕົວຈິງ :**

### 1. ພາກທິດສະດີ

- ແນະນຳພາບລວມ ຂອງວິທີການ 3 ດາວ.
- ຈຸດປະສົງ.
- ສະເໜີມາດຕະຖານແຫ່ງຊາດວ່າດ້ວຍວຽກງານນໍ້າ ແລະ ສຸຂະອະນາໄມໃນສະຖານການສຶກສາກ່ອນໄວຮຽນ ແລະ ໂຮງຮຽນສາມັນ.
- ເນື້ອໃນ ແລະ ມາດຕະຖານວຽກງານສຸຂະອະນາໄມໃນໂຮງຮຽນ.
- ແນະນຳວິທີການນຳໃຊ້ແບບຟອມປະເມີນໂຮງຮຽນ.
- ການຕິດຕາມຊຸກຍູ້ ແລະ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ພາຍໃນໂຮງຮຽນ.
- ການນຳໃຊ້ຜົນການປະເມີນ ແລະ ວາງແຜນເພື່ອຈັດຕັ້ງປະຕິບັດ.

### 2. ພາກປະຕິບັດຕົວຈິງ

- ສຶກສາຄົ້ນຄວ້າລາຍການປະເມີນ, ຫຼັກຖານ ແລະ ກິດຈະກຳ ໃນແຕ່ລະຕົວຊີ້ບອກ.
- ເຝິກປະຕິບັດຕົວຈິງ.
- ສັງລວມຜົນໃນການລົງປະຕິບັດຕົວຈິງ ແລະ ສະຫຼຸບ.

# ການສັງລວມ ແລະ ວິເຄາະຂໍ້ມູນ

ຂໍ້ມູນທີ່ໄດ້ຈາກການປະເມີນຂອງແຕ່ລະໂຮງຮຽນເປົ້າໝາຍ ຈະໄດ້ປ້ອນເຂົ້າໃນຖານຂໍ້ມູນ ໂດຍວິຊາການຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ເພື່ອເຮັດການວິເຄາະ ແລະ ຂຽນບົດລາຍງານ ເພື່ອສົ່ງໃຫ້ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ແລ້ວສົ່ງໃຫ້ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ.

ຫ້ອງການສຶກສາເມືອງຈະສັງລວມວ່າມີຈັກໂຮງຮຽນທີ່ບັນລຸໄດ້ລະດັບໃດ ແລະ ມີຈັກໂຮງຮຽນທີ່ຍັງຕ້ອງໄດ້ສູ້ຊົນ ຊຶ່ງຈະນຳໃຊ້ເຂົ້າໃນການຂຶ້ນແຜນຂອງເມືອງເພື່ອຊຸກຍູ້ ຕິດຕາມຕໍ່ໄປ. ພ້ອມດຽວກັນນັ້ນກໍສ່ອງແສງໃຫ້ພະແນກສຶກສາແຂວງຊາບໂດຍຜ່ານກອງປະຊຸມປະຈຳເດືອນ ຫຼື ໄຕມາດ ແລະ ນຳສົ່ງຖານຂໍ້ມູນໃຫ້ທາງແຂວງເພື່ອເປັນຫຼັກຖານອ້າງອີງ.

## ບົດລາຍງານຕົວຢ່າງ:













## ເອກະສານອ້າງອີງ

ຂໍ້ຕົກລົງ ມາດຕະຖານດ້ານນໍ້າ ແລະ ສຸຂະອະນາໄມສໍາລັບສະຖານການສຶກສາ ກ່ອນໄວຮຽນ ແລະ ໂຮງຮຽນສາມັນ ສະບັບເລກທີ 9230 ລົງວັນທີ 30 ທັນວາ 2019.

Field guide: The 3 Star Approach for WASH in School, UNICEF and GIZ August 2013.

ມາດຕະຖານຄຸນນະພາບການສຶກສາ ສໍາລັບຊັ້ນປະຖົມສຶກສາ, ກະຊວງສຶກສາທິການ, ສ.ປ.ປ ລາວ, ເລກທີ 2167/ສສກ .ສປຄ. 12, ວັນທີ 28 ມິຖຸນາ 2012.

## ຈັດພິມ

ຈັດພິມໂດຍ:
Deutsche Gesellschaft für Internationale
Zusammenarbeit (GIZ) GmbH
ຫ້ອງການ Bonn ແລະ Eschborn

ໃນນາມກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ລັດຖະບານເຢຍລະມັນ (BMZ) ໂຄງການພາກພື້ນ Fit For School, ອົງການ GIZ, ຊັ້ນ 10, ຕຶກທະນາຄານ ມາກາຕິ Ayala Avenue Extention cor Metropolitan Avenue 1209 ເມືອງ Makati, ຟີລິບປິນ.

www.giz.de/en // www.fitforschool.international

ການອອກແບບໂດຍ: Christine Lüdke, buero luedke, ພະແນກຮູບພາບ ເຢຍລະມັນ: ໂຄງການພາກພື້ນ Fit For School, ອົງການ GIZ

ການຮັບຮູ້:
ໂຄງການພາກພື້ນ Fit For School, ອົງການ GIZ ຂໍຂອບໃຈມາຍັງ ກະຊວງສຶກສາທິການ ແລະ ກິລາ,ໂດຍສະເພາະແມ່ນ ກົມການສຶກສາກ່ອນໄວຮຽນ, ພະແນກທີ່ເຮັດວຽກກ່ຽວກັບນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ, ກະຊວງສາທາລະນະສຸກ ແລະ ທຸກໆທ່ານທີ່ປະກອບສ່ວນທາງດ້ານເນື້ອໃນ ແລະ ປະກອບຄໍາຄິດເຫັນຕໍ່ກັບປຶ້ມຫົວນີ້. ສຸດທ້າຍນີ້ຂໍຂອບໃຈມາຍັງ ທ່ານ ນາງ Nicole Siegmund, ທ່ານ Juan Alfonso Leonardia, ທ່ານ ດຣ Bella Monse, ທ່ານ ດຣ Ramoni Bacani, ທ່ານ ນາງ ບົວຈັນ ຈັນສົມ, ທ່ານ ນາງ ສຸດາພອນ ຈັນທະວົງ, ທ່ານ Alexander Winkscha, ທ່ານ ດຣ.ສີສຸກ ວົງວິຈິດ, ທ່ານ ອຸດາລອນ ສີລາວົງ, ທ່ານ ຄໍາຜ່ານ ພົມມະນີຈັນ, ທ່ານ ນາງ ເພັດສະໝອນ ສີບຸນເຮືອງ ແລະ ບັນດາຄູ-ອາຈານ, ນ້ອງນັກຮຽນ ແລະ ພໍ່ແມ່ນັກຮຽນທີ່ມີສ່ວນຮ່ວມ, ໂຄງການພາກພື້ນ Fit For School, ອົງການ GIZ ແລະ ໂຄງການເພື່ອຄວາມຍືນຍົງໃນການພັດທະນາ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ລັດຖະບານເຢຍລະມັນ (BMZ), ໂຄງການພາກພື້ນ Fit For School, ອົງການ GIZ ໄດ້ຈັດຕັ້ງປະຕິບັດໂຄງການຢູ່ ປະເທດຟີລິບປິນ, ອິນໂດເນເຊຍ, ກໍາປູເຈຍ ແລະ ສປປ ລາວ ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ເອເຊຍຕາເວັນອອກສຽງໃຕ້, ສູນນະວັດຕະກໍາ ແລະ ເຕັກໂນໂລຊີການສຶກສາ ລະດັບພາກພື້ນ (SEAMEO INNOTECH). ນອກຈາກນີ້ ຂະແໜງທີ່ເຮັດວຽກກ່ຽວກັບ  ສຸຂະອະນາໄມເພື່ອຄວາມຍືນຍົງ ໄດ້ສະໜັບສະໜູນໃນທົ່ວໂລກກ່ຽວກັບ ວິທີການປະຕິບັດ 'Fit For School' ໂດຍສະເໜີປະສົບການໃຫ້ແກ່ ໂຄງການຕ່າງໆທົ່ວໂລກເຊັ່ນ: ວຽກນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນ, ການສຶກສາ, ແລະ ສຸຂະພາບ ສ່ວນໃຫຍ່ໃນອາຟຣິກາ.

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບ ໂຄງການພາກພື້ນ Fit For School, ອົງການ GIZ ກະລຸນາຕິດຕໍ່: Mr. Juan Alfonso Leonardia, juan.leonardia@giz.de

ການປະຕິເສດຄວາມຮັບຜິດຊອບ: ສິ່ງພິມໄດ້ຖືກແຈກຢາຍໂດຍບໍ່ເສຍຄ່າ ແລະ ຫ້າມການເຜີຍແຜ່ທາງການຄ້າ. ອົງການ GIZ ຊຸກຍູ້ໃຫ້ການແຈກຢາຍຢູ່ໃນໂຮງຮຽນ ແລະ ຊຸມຊົນ, ສໍາເນົາຂອງບົດລາຍງານ, ຈຸດປະສົງສ່ວນບຸກຄົນ ແລະ ການສຶກສາ ແມ່ນອະນຸຍາດໃຫ້ຮັບຮູ້ແຫຼ່ງທີ່ມາ, ການຮ້ອງຂໍສໍາລັບການພິມຄືນ, ການສອບຖາມອື່ນໆ ຄວນຈະຖືກສົ່ງໄປຫາ ໂຄງການພາກພື້ນ Fit For School, ອົງການ GIZ, ໃນມະນິລາ, ຟີລິບປິນ.

ສິງຫາ 2023

ສິ່ງພິມນີ້ໄດ້ຮັບອະນຸຍາດພາຍໃຕ້ Creative Commons:
ແຫຼ່ງທີ່ມາ-ບໍ່ເປັນການຄ້າ-NoDerivatives 4.0 ສາກົນ

BY NC ND





# ສິ່ງເສີມໂຮງຮຽນຂອງທ່ານເພື່ອໃຫ້ບັນລຸດາວ


ສະໜັບສະໜູນໂດຍ:

german cooperation
DEUTSCHE ZUSAMMENARBEIT

ຈັດຕັ້ງປະຕິບັດໂດຍ:

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

FIT FOR SCHOOL

SEAMEO INNOTECH

unicef for every child

World Vision Hope, Joy and Justice for ALL Children

LUX DEV

RDA RURAL DEVELOPMENT AGENCY

PLAN INTERNATIONAL